# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ III ສະບັບທີ 6* ມີນາ 1995
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION

## ການຊ່ວຍເຫລືອ ເພື່ອການອະນຸລັກ



**ໂຄງການປົກປັກຮັກສາໜັງສືໃບລານລາວ** ມີແຜນການດຳເນີນງານທົ່ວປະເທດ ໃນໄລຍະ 8-10 ປີ (1992-2002), ສະເພາະປີນີ້ ກໍເປັນປີທີ ໓ ຂອງໂຄງການ ທີ່ຈະເຄື່ອນໄຫວສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ ຢູ່ແຂວງຫລວງພະບາງ, ໄຊຍະບູລີ ແລະ ອຸດົມໄຊ. ເພື່ອໃຫ້ວຽກງານດຳເນີນໄປດ້ວຍດີ ໃນວັນທີ 11 ມັງກອນ 1995 ຢູ່ທີ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ມີພິທີເຊັນສັນຍາຮັບທຶນຊ່ວຍເຫລືອຈາກລັດຖະບານ ສ.ສ.ເຢຍຣະມັນ ໃນມູນຄ່າ 23.212.330 ກີບ ອັນເປັນທຶນອຸປະຖຳງວດທຳອິດສຳລັບສົກປີນີ້ ໃນຮ່ວງທຶນອຸປະຖຳທັງໝົດ ສົກ 94-95 ຈຳນວນ 100.619.000 ກີບ. ຝ່າຍລາວແມ່ນທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເປັນຜູ້ຮັບ, ຝ່າຍ ສ.ສ.ເຢຍຣະມັນ ແມ່ນທ່ານ ອຸລຣິສ ກູເຊນ ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສ.ສ. ເຢຍຣະມັນ ປະຈຳລາວ ເປັນຜູ້ມອບ ຊ້ອງໜ້າພະນັກງານຂັ້ນນຳທັງສອງຝ່າຍ.

ທຶນຊ່ວຍເຫລືອດັ່ງກ່າວ ນອກຈາກຈະນຳໃຊ້ເຂົ້າໃນວຽກງານສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ ແລ້ວຍັງຈະໄດ້ນຳໄປຊ່ວຍເຫລືອການສຶກສາສົງ ແລະ ການຈັດການສຳມະນາເຊີງປະຕິບັດການຢູ່ແຂວງໄຊຍະບູລີ ເຊິ່ງຈະໄດ້ນຳເອົາພະນັກງານວັດທະນະທຳ, ແນວລາວສ້າງຊາດ ແລະ ພ.ສ.ລ. ເຂດພິເສດ ຊຽງຮ່ອນ ຫົງສາ ເຂົ້າຮ່ວມນຳ. ນອກນັ້ນ ຍັງຈະນຳໃຊ້ເຂົ້າໃນວຽກງານຖ່າຍໄມໂຄຼຟີມ, ເຂົ້າຂໍ້ມູນຄອມພິວເຕີ, ຈັດພິມບັນຊີ ແລະ ເຮັດປື້ມສຳເນົາໃບສຳຫລວດເພື່ອແຈກຢາຍໃຫ້ແຕ່ລະວັດທີ່ສຳຫລວດແລ້ວ, ຊື້ ອຸປະກອນເຕັກນິກ ເຊັ່ນ ເຄື່ອງອັດສຳເນົາໄມໂຄຼຟີມ, ຈັກພິມຂະຫຍາຍໄມໂຄຼຟີມ ແລະ ອຸປະກອນອື່ນໆ.

# ແກະຮອຍໃບລານ ໃນດິນແດນ ອຸດົມໄຊ

*ໂດຍ : ລານກ້ອມ*



*ຫລັງຄາວັດພູແດ, ບ້ານຖິ່ນ, ເມືອງໄຊ, ແຂວງອຸດົມໄຊ*

ພໍເອີ່ຍຊື່ "ອຸດົມໄຊ" ຫລາຍໆຄົນຄົງຈະຮູ້ດີວ່າເປັນແຂວງທີ່ຢູ່ທາງພາກເໜືອ ຂອງລາວ. ຊາຍແດນທາງທິດເໜືອຂອງແຂວງຕິດກັບແຂວງ ຜົ້ງສາລີ ແລະ ປະເທດຈີນ, ທິດຕາເວັນຕົກສຽງເໜືອ ຕິດກັບແຂວງຫລວງນ້ຳທາ ແລະ ແຂວງບໍ່ແກ້ວ, ທິດໃຕ້ຕິດກັບເຂດພິເສດ ຊຽງຮ່ອນ-ຫົງສາ ແລະ ທິດຕາເວັນອອກຕິດກັບແຂວງຫລວງພະບາງ ປະກອບມີ 7 ເມືອງ ຄື : ເມືອງໄຊ, ເມືອງຫລາ, ເມືອງນາ ໝໍ້, ເມືອງແບງ, ເມືອງຮຸນ, ເມືອງປາກແບງ ແລະ ເມືອງງາ.

ອຸດົມໄຊຖືໄດ້ວ່າເປັນເຂດພູດອຍ ແຕ່ກໍ່ສ້າງຄວາມມີຊີວິດຊີວາໃຫ້ກັບດິນແດນຂອງຕົນເອງດ້ວຍສີສັນແຫ່ງວັດທະນະທຳຂອງປະຊາຊົນ ບັນດາເຜົ່າທີ່ຢູ່ຮ່ວມກັນ ເຖິງ 12 ຊົນ ເຜົ່າ ຄື : ເຜົ່າລາວລຸ່ມ, ເຜົ່າພວນ ( ເມືອງຮຸນ ), ເຜົ່າຍັ້ງ ( ເມືອງໄຊ ແລະ ເມືອງແບງ ), ເຜົ່າໄທດຳ, ເຜົ່າໄທຂາວ ( ເມືອງນາໝໍ້), ເຜົ່າຂະມຸ ( ເມືອງນາໝໍ້ ), ເຜົ່າມົ້ງ, ເຜົ່າແລນແຕນ ຫລື ລາວຫ້ວຍ, ເຜົ່າກໍ່, ເຜົ່າພູນ້ອຍ ເຜົ່າພູຊາງ, ເຜົ່າກົງຊານ ຫລື ເຜົ່າພູຍອດ ດຳລົງຊີວິດຢູ່ຮ່ວມກັນຕາມອັດຕະພາບ. ເປັນຊີວິດທີ່ບໍ່ຕ້ອງຟ້າວຟັ່ງ ແຕ່ມີຄວາມສຸກກັບສິ່ງທີ່ຕົນເອງມີຢູ່. ຮູບພາບທີ່ເຕັມໄປດ້ວຍຕົ້ນໄມ້ສີຂຽວ ສະຫລັບດ້ວຍພູຜາສູງເດັ່ນ, ບາງບ່ອນຈະມີພືດຜັກ ສວນຄົວທີ່ປູກໄວ້ຕາມແຄມນ້ຳນາວ, ນ້ຳພາກ, ນ້ຳກໍ່ ສະທ້ອນໃຫ້ເຫັນວ່າ ປະຊາຊົນສ່ວນຫລາຍຍັງຄົງໃຊ້ຊີວິດຕິດພັນກັບທຳມະຊາດ ຕາມວິຖີທາງຂອງສັງຄົມກະສິກຳໄດ້ເປັນຢ່າງດີ ປະຊາຊົນເຫລົ່ານີ້ເອງ ທີ່ເປັນປັດໄຈສຳຄັນໃນການຮັກສາແບບວິຖີການດຳລົງຊີວິດ ທີ່ເປັນເອກະລັກສະເພາະຂອງຕົນເອງ.

ນອກຈາກວິຖີຊີວິດ ແລະ ທຳມະຊາດອັນໜ້າປະທັບໃຈແລ້ວ ສິ່ງສຳຄັນທີ່ເພີ່ມຄວາມມີສະເໜ່ໃຫ້ແກ່ດິນແດນແຫ່ງນີ້ ໄດ້ແກ່ວັດທະນະທຳຄວາມເຊື່ອຖື. ປະຊາຊົນຢູ່ໃນອົງເຂດນີ້ ຍັງຄົງນັບຖືສາສະໜາພຸດເປັນສ່ວນ

## ເຊີນອ່ານ


- *ຜີຍານ ແຫ່ງອະດີດ*
- *ຄຳພູກແຂນ...*
- *ສັງຮອມການເຄື່ອນໄຫວ*
- *ນ້ຳໃຈສາທຸອ້ອນ*

ຫລາຍ. ພຸດທະປັດຊະຍາເປັນພື້ນຖານໃນການພັດທະນາວັດທະນະທຳທາງດ້ານວັດຖຸ ແລະ ຈິດໃຈ ມີສັດທາອັນແຮງກ້າ ສ້າງວັດວາອາຣາມຂື້ນ ໃນນີ້ ມີຫລາຍແຫ່ງໄດ້ກາຍເປັນສະຖານບູຮານທີ່ເກົ່າແກ່ ແລະ ມີຄຸນຄ່າທາງປະຫວັດສາດ ເຊັ່ນ : ວັດພະສິງຄຳ ( ເມືອງຫລາ ), ວັດຈອມແຈ້ງ, ວັດ ປາກເງີນ ( ເມືອງປາກແບ່ງ ) ວັດນາຊານ ( ເມືອງງາ ).

ຄຽງຄູ່ກັບນັ້ນ ບັນດານັກປາດອາຈານ ຍັງໄດ້ສ້າງວັດໃຫ້ເປັນຫໍສະຫມຸດ ບັນຈຸ ແລະ ຮັກສາຄຳພີດີກາ ຕະຫລອດເຖິງຕຳນານ, ຕຳລາທາງວິຊາການ ທີ່ຢູ່ໃນຮູບຂອງຫນັງສືໃບລານ ແລະ ພັບສາ ບັນທຶກເປັນຕົວທຳລື້ ແລະ ຕົວທຳລາວ ເພື່ອການຄົ້ນຄວ້າຮ່ຳຮຽນຂອງຝ່າຍພະສົງ ແລະ ຄາລະວາດ. ນອກນັ້ນ ເພີ່ນຍັງນຳໃຊ້ເຂົ້າໃນການອ່ານໃນງານບຸນສິນກິນທານ ແລະ ປະເພນີຢູ່ກຳ ເຮັດໃຫ້ວັດທະນະທຳໃບລານ ມີບົດບາດຍິ່ງຂື້ນໃນຊີວິດ ວັດທະນະທຳ ຂອງຊາວອຸດົມໄຊ.



ເຈົ້າອາວາດ... ບ້ານ... ເມືອງໄຊ ແຂວງອຸດົມໄຊ ກັບການຄົ້ນຄວ້າ ເອກະສານບູຮານ

ໃນໄລຍະແຫ່ງການຕໍ່ສູ້ກູ້ຊາດ ແຂວງອຸດົມໄຊເປັນແຂວງຫນຶ່ງ ທີ່ໄດ້ຮັບຜົນສະທ້ອນຈາກໄພສົງຄາມ ເຊິ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ຊີວິດ, ຊັບສິນ ບ້ານເຮືອນ, ໄຮ່ນາ ຮົ້ວສວນ, ວັດວາ ອາຮາມ ຕະຫລອດຮອດຄຳພີດີກາມີລະດັບທີ່ສຳຄັນກໍ່ຖືກເຜົາຜານ. ເຖິງຈະຢູ່ໃນສະພາບທີ່ຫນ້າຢ້ານກົວກໍ່ຕາມ ປະຊາຊົນອຸດົມໄຊ ກໍ່ບໍ່ຍອມໃຫ້ຫນັງສືໃບລານມີລະດັບທາງພູມປັນຍາ ຂອງບັນພະບຸລຸດນັ້ນສູນເສຍໄປ ເຂົາເຈົ້າພະຍາຍາມກອບກູ້ເອົາຄຳພີໃບລານໄວ້ ສຸດຄວາມສາມາດ ເອກະສານທີ່ກອບກູ້ໄດ້ຈຶ່ງນຳມາເກັບຮັກສາໄວ້ ຕາມບ້ານເຮືອນ ຕາມຖ້ຳ, ພູຕ່າງໆ ພາຍລຸນມາກໍ່ໂຫມກເນົ່າເສຍຫາຍໄປຕາມການເວລາ.

ພາຍຫລັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ປະຊາຊົນທົ່ວແຂວງ ໄດ້ດຳເນີນການ ສ້າງສາພັດທະນາ ທາງດ້ານເສດຖະກິດ ສັງຄົມ ສ່ວນທາງດ້ານວັດທະນະທຳ ເຖິງຈະຖືກເສຍຫາຍ ທາງດ້ານວັດຖຸ ແຕ່ວັດທະນະທຳ ທາງດ້ານຈິດໃຈ ຍັງຖືກຍັງຮັກສາໄວ້ເປັນຢ່າງດີ ປະຊາ ຊົນແຕ່ລະ



ຂັບລຳ ໂດຍຄະນະບັນເທີງອາວຸໂສ ຂຸນເຜົາລາ, ບ້ານ..., ເມືອງໄຊ, ແຂວງອຸດົມໄຊ

**ສັງຮອມ**... *ຕໍ່ຈາກໜ້າ 16*

ແລ້ວ ນັກວິຊາການຂອງແຂວງຍັງໄດ້ບົດຮຽນດີໆ ຈາກລຸງໃຫຍ່ເພີ່ມຫລາຍຢ່າງ.

ໃນການສຳຫລວດຄັ້ງນີ້ ພົບເຫັນໜັງສືທີ່ສຳຄັນ ແລະ ມີອາຍຸເກົ່າແກ່ ເຊັ່ນ : ເລື່ອງ**ທຳມະບົດ, ທຸກກະນິບາດ, ຄຳພີພະສັງຄີນີ, , ອະພິທຳມະສັງຄີນີ, ພະລະສັງຂະຫຍາ, ສຸວັນນະຫອຍສັງ, ນົກຍຸງຄຳ ນິຍາຍ ສຸກໂຂ.**

ຈາກນັ້ນ ກໍ່ເຄື່ອນຍ້າຍມາທີ່ວັດອຸດອນເຜນໄພສານ ບ້ານດອນເກົ່າ ການສຳຫລວດຢູ່ວັດນີ້ ພົບເຫັນໜັງສືໃບລານ 1.249 ຜູກ ລວມມີ 104 ມັດ ໃນນັ້ນ ມີເອກະສານທີ່ຈະຖ່າຍໄມໂຄຟີມ 75 ຜູກ ມີຫລາຍເລື່ອງທີ່ສຳຄັນ ແລະ ເກົ່າແກ່ເຊັ່ນ : ສັງຄຣາຫທີສາດ ປາຣາຊິກັນ, ນີໄສວິສຸທທິມັຄ, ສຸວັນນະມຸກຂາ, ບັ້ນທານວໍ ຣໍ່ທນາກ ໆລໆ.

ປະຈຸບັນ ໜ່ວຍສຳຫລວດປະຈຳ ແຂວງຫລວງພະບາງ ພວມດຳເນີນວຽກງານຢູ່ທີ່ວັດໜື່ນນາ ແລະ ຈະສືບຕໍ່ການສຳຫລວດ ແລະ ປົກປັກຮັກສາ ຢູ່ວັດແຫ່ງອື່ນໆ ໃນແຂວງຫລວງພະບາງຕະຫລອດສົກປີ 1995 ນີ້.

# ຜະຫຍາ ພາສິດ

ຈາກ ຄັງຜະຫຍາຂອງ ຈານຈຸ໊ມ

* ແກ້ວກໍ່ຫາກຍັງຕ່າງແກ້ວ ຖືຄ່າແສນ ເມືອງ ແມ່ເອີຍ
ບໍ່ໃຊ່ແມວຊາຍຜົງ ແຂ່ຊະຄອນ ແຄມນ້ຳ
ຫາກບໍ່ສົມຄ່າແກ້ວ ທຳມະໂລງກໍ່ຕາມໂຊກ ເຮົາທ້ອນ
ຫີນແຮ່ ເຈົ້າຫາກກຸມວ່າແກ້ວ ຕາມເຈົ້າຊິວ່າເອົາ ຕົ້ນທ້ອນ

ຄຽງຄູ່ກັບນັ້ນ ຢູ່ທີ່ໂຄງການ ວຽກງານການຖ່າຍໄມໂຄຟີມ ເຊິ່ງແມ່ນວິທະຍາການສະໄໝໃໝ່ທີ່ມີປະສິດທິພາບສູງ ໃນການອະນຸລັກໜັງສືໃບລານກໍພວມດຳເນີນໄປຢ່າງຮີບຮ້ອນ ໜັງສືທີ່ນຳເອົາມາຖ່າຍເວລານີ້ ມາຈາກຫໍສະໝຸດແຫ່ງຊາດ ທີ່ໄດ້ສຳຫລວດ ແລະ ຂຶ້ນບັນຊີແລ້ວໃນປີ 1991. ໃນນັ້ນມີເອກະສານສຳຄັນທີ່ຈະຕ້ອງຖ່າຍໄມໂຄຟີມ 4000 ກວ່າຜູກ ເລີ່ມຖ່າຍແຕ່ວັນທີ 17 ມັງກອນ 1995 ເປັນຕົ້ນມາ ຄາດວ່າຈະສຳເລັດໃນທ້າຍປີ 1995 ນີ້./.

✦ ✦

➡

ທ້ອງຖິ່ນ ໄດ້ມີຈິດໃຈສັດທາຮ່ວມກັນປະຕິສັງຂອນ ວັດວາອາຮາມຄືນໃໝ່, ຮີບໂຮມຄຳພີໃບລານທີ່ກອບກູ້ໄດ້ມາໄວ້ຕາມວັດຕ່າງໆ ເພື່ອການສຶກສາຮ່ຳຮຽນ ແລະ ນຳໃຊ້ໃນຝ່າຍພະສົງ ແລະ ຄາລະວາດ ເຖິງແມ່ນວ່າ ຄຳພີໃບລານເຫລົ່ານັ້ນ ຈຳນວນໜຶ່ງຢູ່ໃນສະພາບທີ່ຊຳລຸດກຸດເຫຼນ. ໂດຍເຫັນຄວາມສຳຄັນ ຂອງມໍລະດົກ ຂອງຊາວອຸດົມໄຊ ກໍ່ຄືຂອງຊາດ ເຫັນວ່າຈະຕ້ອງຮີບຮ້ອນປົກປັກຮັກສາ ແລະ ຟື້ນຟູວັດທະນະທຳໃບລານ ໃຫ້ມີຊີວິດຊີວາຍິ່ງຂຶ້ນ ຕະຫລອດໄລຍະ 2 ເດືອນ ໂຄງການປົກປັກຮັກສາໜັງສືໃບລານລາວຈຶ່ງໄດ້ສົມທົບກັບວິຊາການທີ່ກ່ຽວຂ້ອງ ໃນພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແລະ ຫ້ອງການແຂວງອຸດົມໄຊ ດຳເນີນການປົກປັກຮັກສາມໍລະດົກທາງພູມປັນຍາ ຂອງປະຊາຊົນແຂວງອຸດົມໄຊ ໃນ 3 ເມືອງ ຄື : ເມືອງໄຊ, ເມືອງປາກແບງ ແລະ ເມືອງງາ. ວຽກງານດັ່ງກ່າວ ໄດ້ປູພື້ນໃຫ້ປະຊາຊົນ ແລະ ພະສົງ ສາມະເນນ ໃນແຕ່ລະທ້ອງຖິ່ນເປັນເຈົ້າ ໃນການປົກປັກຮັກສາ, ຮຽນຮູ້ວິທີມັດຮຽນມັດໜັງສືໃບລານ, ພັບສາດ້ວຍຕົນເອງ. ນອກນັ້ນເອົາເຈົ້າຍັງໄດ້ສຳຜັດ ກັບບັນຍາກາດອັນໃໝ່ ໃນການຟື້ນຟູວັດທະນະທຳ ທາງຕົວທຳ ເຊັ່ນ : ການແຫ່ຄຳພີໃບລານ ປະກອບສຽງຂັບລຳທ້ອງຖິ່ນ ແລະ ສຽງດົນຕີພື້ນເມືອງທີ່ຟັດຟື້ນ. ເອົາເຈົ້າເອງ ມີຄວາມຮູ້ສຶກເປັນກຽດ ທີ່ໄດ້ເຂົ້າຮ່ວມວຽກງານທີ່ສຳຄັນນີ້ ຖືໄດ້ວ່າເປັນການກະທຳທີ່ຍິ່ງໃຫຍ່ ທີ່ຈະຕົກທອດໄປສູ່ການເວລາທີ່ຍາວນານ./.



# ພື້ຍານ ແຫ່ງ ອະດີດ

**ຮອງສາສະດາຈານ ສົມຫມາຍ ເປຼມຈິດ**

*ອະດີດອາຈານສອນໃນຄະນະມານຸດວິທະຍາ ຊ່ຽວຊານດ້ານຄຳພີໃບລານ ລ້ານນາ ແລະ ລ້ານຊ້າງ ສະຖາບັນວິໄຈສັງຄົມ ມະຫາວິທະຍາໄລຊຽງໃຫມ່, ປະເທດໄທ.*

*( ບົດປະກອບຄຳເຫັນທາງວິຊາການ ຕໍ່ກອງປະຊຸມສະຫລຸບວຽກງານອັ້ນບັນຊີຫນັງສືໃບລານ 4 ແຂວງພາກໃຕ້ ທີ່ແຂວງສະຫວັນນະເຂດ ໃນວັນທີ 17-21/4/94 )*



ເຮົາສາມາດເວົ້າໄດ້ເຕັມປາກວ່າ ພູມປັນຍາ ຂອງບັນພະບຸລຸດເຮົາ ທີ່ຕົກທອດມາເຖິງອະນຸຊົນຮຸ່ນຫລັງ ຫາກບໍ່ໄດ້ຜ່ານການຈົດຈຳບອກເລົ່າຕໍ່ກັນມາແລ້ວກໍ່ຈະມີຢູ່ໃນເອກະສານໃບລານ ແລະ ສີລາຈາລຶກເທົ່ານັ້ນ ດັ່ງນັ້ນ ວຽກງານສຳຫລວດຫນັງສືໃບລານ ຈຶ່ງນັບໄດ້ວ່າເປັນວຽກທີ່ສຳຄັນຕໍ່ການອະນຸລັກມໍລະດົກ ທາງປັນຍາຂອງປະເທດຊາດໂດຍແທ້ຈິງ ແຕ່ມັກຈະເກີດບັນຫາຢູ່ສະເຫມີວ່າ ຄົນຮຸ່ນໃຫມ່ທີ່ມີຄວາມຄຸ້ນເຄີຍຢູ່ກັບການອ່ານຫນັງສື ສະໄຫມໃຫມ່ ເຊິ່ງມີການຂຽນ ແລະ ສຳນວນໂວຫານແຕກຕ່າງຈາກເອກະສານສະໄຫມບູຮານ ມັກຈະເຫັນວ່າ ເອກະສານໃບລານເປັນເລື່ອງທີ່ບໍ່ມີສາລະ ແລະ ບໍ່ມີປະໂຫຍດທາງວິຊາການ ນອກຈາກຈະຮັກສາໄວ້ ເພື່ອອ່ານໃຫ້ຄົນທີ່ເຂົ້າວັດຟັງ. ຖ້າຈະເວົ້າຕາມຄວາມຈິງແລ້ວ ເອກະສານປະເພດນີ້ ສາມາດໃຫ້ເຮົາໄດ້ຫລາຍຢ່າງ ແຕ່ຂຶ້ນຢູ່ກັບວ່າ ຜູ້ນັ້ນຈະພິຈາລະນາ ຈະຮູ້ຈັກຄັດເລືອກຫາສາລະໄດ້ຫລາຍນ້ອຍປານໃດ ແລະ ນຳເອົາໄປໃຊ້ໃນກໍລະນີໃດແດ່ ຖ້າບໍ່ມີພື້ນຖານຄວາມຮູ້ໃນເລື່ອງນີ້ມາກ່ອນ ກໍ່ຈະບໍ່ເຫັນຄຸນປະໂຫຍດ ຈາກເອກະສານເຫລົ່ານີ້.

ດັ່ງທີ່ບາງທ່ານໄດ້ຮູ້ແລ້ວວ່າ ຄຳພີໃບລານ ທີ່ເຮົາກຳລັງປົກປັກຮັກສາຢູ່ນີ້ ສ່ວນໃຫຍ່ຈະມີເນື້ອໃນທີ່ກ່ຽວກັບພະພຸດທະສາສະຫນາ ນອກນັ້ນກໍ່ເປັນເລື່ອງທີ່ກ່ຽວກັບຄະດີໂລກ ເຊັ່ນ : ຄະດີທຳ ຄຳສອນ, ກົດຫມາຍໂບຮານ, ຕຳນານພື້ນເມືອງ ຕຳລາຢາ, ນິທານພື້ນບ້ານ... ຜູ້ຈະໃຊ້ເອກະສານເຫລົ່ານີ້ ຄວນຈະມີຄວາມເຂົ້າໃຈກ່ອນວ່າ ການແຕ່ງຕຳນານ ຫລື ຄຳພີໃນທາງພະພຸດທະສາສະຫນາ ໂດຍນັກຂຽນໃນຍຸກນັ້ນ ຈະມີວິທີການຂຽນເປັນອີກແບບຫນຶ່ງ ເຊິ່ງມີຄວາມແຕກຕ່າງຈາກການຂຽນຫນັງສືໃນສະໄຫມປັດຈຸບັນ ໂດຍສະເພາະເລື່ອງທີ່ເປັນປະໂຫຍດຕໍ່ການສຶກສາທາງໂລກນັ້ນ ມີບາງຢ່າງທີ່ເຮົາຕ້ອງເຂົ້າໃຈ ແລະ ຮູ້ຈັກຄັດເລືອກເອົາແຕ່ສິ່ງທີ່ເປັນສາລະ ໂດຍຈະຂໍຍົກໃຫ້ເຫັນເປັນຕົວຢ່າງ ດັ່ງນີ້ :

I. **ເນື້ອໃນທີ່ກ່ຽວກັບທາງສາສະຫນາ** ເຊັ່ນ: ຕຳນານມູນລະສາສະຫນາ, ຕຳນານພະເຈົ້າ ລຽບໂລກ, ຕຳນານພະທາດ, ຕຳນານພະບາດ, ຕຳນານພະພຸດທະຮູບ, ຕຳນານພະເຖຣະ... ເຊິ່ງ ຈະມີລີລາການຂຽນ ທີ່ມີຮູບແບບສະເພາະຕ່າງຫາກ ໂດຍຈະດຳເນີນໄປ ຕາມຂັ້ນຕອນຫລັກ 2 ສ່ວນຄື :

➡

1. **ສ່ວນເບື້ອງຕົ້ນເປັນນິທານປະລຳປະລາ** ເລີ່ມຕັ້ງແຕ່ພະໂພທິສັດໄດ້ຮັບອາຣາທະນາໃຫ້ລົງມາອຸບັດເກີດໃນໂລກມະນຸດ ເຊິ່ງເນື້ອໃນສ່ວນໃຫຍ່ນຳມາຈາກນິທານຊາດົກ ໃນພະສຸຕັນຕະປິດົກ ໂດຍຍົກເອົານິທານຊາດົກມາເປັນບົດນຳ ເລີ່ມຕັ້ງແຕ່ພະໂພທິສັດ ໄດ້ຊົງອຸບັດເກີດໃນຕົ້ນປະຖົມກັບ ເປັນພະເຈົ້າມະຫາສະມັນຕະຣາດປະຖົມກະສັດ ສະເຫວີຍຣາຊະສົມບັດ ໃນຊົມພູທະວີບ ຕໍ່ຈາກນັ້ນ ກໍ່ມີພະຣາຊະໂອລົດສືບສັນຕິວົງ ມາເປັນລຳດັບ ມີຈຳນວນ 84.000 ອົງ ຈົນມາເຖິງ ໂອກາກະວົງທັ້ງ 3 ຄື ປະຖົມ ໂອກກາກະຣາດ ທຸຕິຍະໂອກກາກະຣາດ ແລະ ຕະຕິຍະໂອກກາກະຣາດ ເນື້ອເລື່ອງດຳເນີນໄປຕາມລຳດັບຈົນເຖິງຕອນທີ່ພະພຸດທະເຈົ້າສະເດັດມາເຖິງດິນແດນຂອງຜູ້ແຕ່ງຕຳນານ ເຊິ່ງເປັນເລື່ອງທີ່ມີຈຸດປະສົງຈະຂຽນໄວ້ໂດຍກົງ.

2. **ສ່ວນທີ່ສອງເປັນເລື່ອງປັດຈຸບັນ** ນັບຕັ້ງແຕ່ພະໂພທິສັດຊົງອຸບັດເກີດເປັນເຈົ້າຊາຍ ສິດທັດຖະ ແລະ ໄດ້ສະເດັດອອກບວດບຳເພັນພົດຢູ່ 6 ພັນສາ ແລ້ວ ໄດ້ຕັດສະຣູ້ເປັນພະສຳມາສຳພຸດທະເຈົ້າ ໄດ້ສະເດັດໄປເທສະໜາໂປດເວໄນຍະສັດທັງຫລາຍ ບຳເພັນພຸດທະກິດ 5 ປະການ ໃຫ້ສຳເລັດປະໂຫຍດແກ່ຄົນ ແລະ ເທວະດາທັງຫລາຍ ໃນເມືອງຕ່າງໆ ເຊັ່ນ : ກະບິນລະພັດ, ພາຣານະສີ, ໂກສຳພີ, ມິຖິລາ, ອາລະວີ ເປັນຕົ້ນ ນານໄດ້ 45 ພັນສາ ຈຶ່ງສະເດັດຂັບປະຣິນິພານ.

II. **ເນື້ອໃນທີ່ເປັນປະຫວັດສາດ** ທີ່ມີຂໍ້ມູນທາງປະຫວັດສາດຂອງບ້ານເມືອງ ຫລື ອານາຈັກຕ່າງໆ ຕະຫລອດຈົນພະມະຫາກະສັດທີ່ຊົງຄອງຣາຊະສົມບັດໃນອານາຈັກທີ່ປາກົດຢູ່ໃນໂລກ ພະພຸດທະສາສະໜາ ສາມາດແບ່ງໄດ້ເປັນ 2 ຕອນ ເຊັ່ນກັນຄື :



*ຈິດຕະກຳຝາຜະໜັງ ວັດຄອນໂມ, ເມືອງຊຽງເງິນ, ແຂວງຫລວງພະບາງ*

1. **ເລື່ອງຄືກດຳບັນທີ່ເປັນພຽງນິທານ ປະລຳປະລາ** ແຕ່ບໍ່ໄດ້ໃຫ້ລາຍລະອຽດຍືດຍາວ ຄືໃນຕຳນານທາງສາສະໜາໂດຍກົງ ຂໍໃຫ້ເຂົ້າໃຈວ່າເປັນພຽງວິທີການແຕ່ງເທົ່ານັ້ນ ຍັງຖືວ່າເປັນປະຫວັດສາດບໍ່ໄດ້ ເພາະຂາດຫລັກຖານທາງປະຫວັດສາດ ເປັນເລື່ອງ ທີ່ຍືມມາຈາກນິທານຊາດົກເປັນສ່ວນໃຫຍ່ ສ່ວນຊື່ບຸກຄົນ ວັດວາອາຣາມ, ບ້ານເມືອງ, ອານາຈັກ ພະມະຫາກະສັດອາດຈະມີທີ່ເປັນປັດຈຸບັນ ແລະ ທີ່ມີໃນຕຳນານ ຫລືຄຳພີທີ່ແຕ່ງກ່ອນ ເຊິ່ງລ້ວນແຕ່ເອົາມາຈາກ ຕຳນານ ຫລື ຄຳພີທາງສາສະໜາທັງນັ້ນ ບໍ່ວ່າຈະເປັນເລື່ອງທີ່ແຕ່ງຂຶ້ນໃນປະເທດໃດ ກໍ່ມັກຈະມີຂໍ້ຄວາມຊ້ຳໆກັນ ເກືອບຈະຄືກັນກັບທີ່ມີຢູ່ໃນຄຳພີຕົ້ນແບບ.

ລັກສະນະເຊັ່ນນີ້ ສາມາດເຫັນໄດ້ຊັດເຈນ ໃນວັນນະກຳປະເພດນິທານປະຫວັດສາດ ທີ່ແຕ່ງຂຶ້ນຫລັງສະໄຫມພຸດທະການ ເຊັ່ນ : ທີປະວັງສະ, ມະຫາວັງສະ, ຈາມເທວີ ວັງສະຊິນກາລະມາລີປະກອນ, ຕຳນານຊຽງແສນເປັນຕົ້ນ. ຕຳນານທີ່ກ່າວມານີ້ ຕອນອະລຳພະບົດກໍ່ເປັນເລື່ອງທີ່ເອົາອອກມາຈາກນິທານຊາດົກແດ່, ຈະລິຍາປິດົກແດ່ ຫລື ບໍ່ດັ່ງນັ້ນກໍ່ອາດແຕ່ງຕາມແບບນັ້ນ ໂດຍໃຊ້ຊື່ພະເອກ ແລະ ຊື່ສະຖານທີ່ໃນເລື່ອງ ຕາມທີ່ປະກົດ ໃນຕຳນານຕົ້ນແບບນັ້ນ ຫລື ອາດຈະໃຊ້ຊື່ອື່ນແທນກໍ່ເປັນໄດ້.

ໃນກໍລະນີນີ້ ຂໍຍົກຕົວຢ່າງຕຳນານຊຽງແສນ ເຊິ່ງຕອນຕົ້ນຕຳນານເລີ່ມດ້ວຍນິທານປະລຳປະລາ ຕັ້ງແຕ່ພະໂພທິສັດເກີດມາເປັນພະເຈົ້າມະຫາສະມັນຕະຣາດ ຕໍ່ຈາກນັ້ນນານນັບເປັນກັບເປັນກັນ ຈຶ່ງມາເຖິງສາກະຍະວົງ ຂອງພະພຸດທະເຈົ້າ ມີກະສັດຄອງລາຊະສົມບັດຫລາຍແສນພະອົງ ແລ້ວຈຶ່ງໂຍງເຂົ້າມາເຊື່ອມຕໍ່ກັບເລື່ອງເມືອງຊຽງແສນ ແລະ ຊື່ກະສັດທີ່ກໍ່ຕັ້ງເມືອງຊຽງແສນ ຄື ສິງຫະນະວັດນະຄອນ ເຊິ່ງເປັນຊື່ທີ່ຢືມມາຈາກຕຳນານ ທາງພະພຸດທະສາສະຫນາທັງສິ້ນ ແລະ ຍັງບອກວ່າ ທີ່ຕັ້ງ ເມືອງແຫ່ງນີ້ເມື່ອກ່ອນເຄີຍເປັນທີ່ຕັ້ງເມືອງໃນຊື່ດຽວກັນ ໃນສະໄຫມຂອງພະພຸດທະເຈົ້າ ຊົງນາມວ່າ ກັດສະປະ ຕົວຢ່າງ ການເລີ່ມອະລຳພະບົດຕຳນານທີ່ຍຶດແນວວັນນະກຳໃນພະໄຕປິດົກນັ້ນ ເລີ່ມປາກົດຂຶ້ນຄັ້ງທຳອິດ ໃນຄຳພີທີປະວົງ ແລະ ຄຳພີມະຫາວົງ ເຊິ່ງເປັນພົງສາວະດານ ລັງກາ ໄດ້ດຳເນີນເລື່ອງໄປຕາມບັນຫາທີ່ສຳຄັນໃນທຳນອງດຽວກັນ ເຊັ່ນ : ພະໂພທິສັດ ປາດຖະຫນາ ພຸດທະພູມ, ພະພຸດທະເຈົ້າສະເດັດໄປເກາະລັງກາເປັນຕົ້ນ.

ເມື່ອກັບຄືນມາເວົ້າເຖິງຕົ້ນກຳເນີດຂອງ ອານາຈັກຕ່າງໆກໍ່ຈະແຕ່ງເລື່ອງໄປອີກແບບຫນຶ່ງຄື ບັນພະບຸລຸດທີ່ເປັນຕົ້ນກຳເນີດ ແທນທີ່ຈະເປັນມະນຸດຊ້ຳພັດເປັນສັດເດຍລະສານ ໂດຍສະເພາະໃນຂ້າງຝ່າຍບິດາ ດັ່ງໃນກໍລະນີຂອງພະເຈົ້າ ວິຊະຍະພະຫຸ ໃນຄຳພີມະຫາວົງ ກໍ່ເປັນສິງ ສ່ວນໃນກໍລະນີບັນພະບຸລຸດ ຂອງລາວກໍ່ເປັນນາກ ແລະ ມີນິທານປະລຳປະລາ ສະແດງເຖິງທີ່ໄປທີ່ມາປະກອບພ້ອມ.

2. **ເລື່ອງທີ່ເປັນປະຫວັດສາດ** ຄືເລື່ອງທີ່ມີຫລັກຖານ ຫລື ຂໍ້ມູນສະຫນັບສະຫນູນໃຫ້ເຊື່ອໄດ້ວ່າ ເປັນປະຫວັດສາດແທ້ ເຊິ່ງສ່ວນໃຫຍ່ຫລັກຖານເຫລົ່ານັ້ນ ອາດຈະປາກົດໃນເອກະສານຈີນແດ່, ສິລາຈາລຶກແດ່, ຕຳນານພື້ນເມືອງຕ່າງໆ ສິ່ງເຫລົ່ານີ້ເຮົາສາມາດນຳມາປະກອບເຂົ້າກັນ ໃຫ້ເປັນປະຫວັດສາດຂຶ້ນມາໄດ້ ໃນລະດັບຫນຶ່ງ ເຊັ່ນ : ເລື່ອງການເລືອກສະຖານທີ່ຕັ້ງເມືອງໃນຕຳນານຕົ້ນແບບ. ຫາກບໍ່ມີເອກະສານທຳນອງນີ້ແລ້ວ ຄົງບໍ່ມີໃຜຮູ້ຄວາມເປັນມາໃນອະດີດຂອງພວກເຮົາ ເພາະສະໄຫມນັ້ນ ເຮົາຍັງເປັນຊາດທີ່ບໍ່ມີຄວາມຕື່ນຕົວໃນເລື່ອງການສຶກສາທາງໂລກ ຫລື ມີພາກສ່ວນທີ່ຈົດບັນທຶກເລື່ອງລາວຂອງບ້ານເມືອງຄືກັບສະໄຫມປັດຈຸບັນ ແຕ່ເຮົາຈະຕ້ອງພິຈາລະນາ ແລະ ເລືອກເຟັ້ນໃຫ້ເປັນ ຈະຕີລາຄາລວມໆໄປວ່າເອກະສານ ໃບລານເປັນເລື່ອງທີ່ໄຮ້ສາລະ ຄືດັ່ງທີ່ບາງທ່ານກ່າວວ່າ ຕຳນານພື້ນເມືອງທັງຫລາຍ ເປັນເລື່ອງທີ່ບໍ່ມີຄຸນຄ່າ ທາງປະຫວັດສາດ ກ່ຽວກັບເລື່ອງເຊັ່ນນີ້ ມີຄົນເຄີຍເຮັດຜິດພາດມາແລ້ວ ໃນອະດີດ ດັ່ງນັ້ນ ພະພຸດທະເຈົ້າຈຶ່ງຊົງຕັກເຕືອນໄວ້ວ່າ:

**"ຄົນເຮົາ ຖ້າຂາດຕາ ຄືປັນຍາເສຍແລ້ວ ກໍ່ປຽບເຫມືອນຄວາຍຕາບອດ ທີ່ທ່ຽວໄປໃນປ່າ ຍ່ອມຢຽບໄດ້ແມ່ນແຕ່ໄຟທີ່ສ່ອງທາງ"**



# ຄຳບາສີ ຜູກແຂນ ຜູ້ບວດສິກອອກໃໝ່

ລິດຈະນາໂດຍ ມະຫາບຸນເລີດ ທຳມະຈັກ
(ຈາກໜັງສືໃບລານວັດກາງ, ບ້ານລິ່ງຊັນ
ເມືອງຫຼະຄົນ, ແຂວງວຽງຈັນ)

ໂອກາສະ ໆ ສີສີ ສິດທິພະພອນ ພະບ໋ວອນແວນວິເສດ ອະດິເລກະເຕໂຊ ມະໂຫລາລ້ຳລຶກ ຖືກໜ່ວຍ ຊື່ວ່າ ອັສສະວະນີ ມື້ນີ້ ແມ່ນມື້ດີວັນດີ ວັນດິດຖີອະມຸດຕາໂຊກ ປະສິດທິໂຍກພ້ອມລັກຂະນາ ຝູງຂ້າທັງຫລາຍ ທັງຍິງຊາຍໃຫຍ່ນ້ອຍ ໜ້າຊື່ນຊ້ອຍໃສສີ ທັງນາຣີສາວບ່າວ ພ້ອມກັນມີໃຈຍິນດີຊົມຊື່ນ ພ້ອມກັນຍື່ນພາ ເບີກລາບາສີສູ່ຂວັນໃຫ້ແກ່.... (ໃສ່ຊື່) ເຈົ້າສິກໃໝ່ ໃຫ້ເຈົ້າມີຍົດ ໃຫຍ່ ໄດ້ສະເວີຍເມືອງ ໃຫ້ເຈົ້າມີຍົດເຮືອງທົ່ວຊຸມພູທີບ ທຸກກີບກ້ຳຈັກກະວານ ໃຫ້ເຈົ້າໄດ້ເປັນຂຸນ ກວນຕາງເຈົ້າ ມື້ນີ້ ແມ່ນມື້ເຮົາວັນດີ ມື້ນີ້ວັນນີ້ ສັງກາດຂຶ້ນຣາສີໃໝ່ ກໍແມ່ນມື້ນີ້ວັນນີ້ ຟ້າແຖນຕັ້ງປີໃໝ່ໃສງາມກໍ່ຕັ້ງມື້ນີ້ວັນນີ້ ພະຍາໃຫຍ່ຍ້າຍກົງແກ້ວຍໍແສງ ກໍຍໍມື້ນີ້ວັນນີ້ ເຮົາຈັກຍ້ອມຄຳແດງໃຫ້ຂຶ້ນ ມື້ນີ້ວັນນີ້ ທ່ານແກ້ວຂຶ້ນສູ່ຄອນຄຳ ກໍຂຶ້ນມື້ນີ້ວັນນີ້ ພະຍາອິນທານຳເອົານາງສຸດຊາດາຂຶ້ນນັ່ງແທ່ນແກ້ວ ກໍຂຶ້ນມື້ນີ້ວັນນີ້ ນົກແອ່ນແສ້ວຂຶ້ນນອນຮັງ ກໍຂຶ້ນມື້ນີ້ວັນນີ້ ເຂີງຄຳຂຶ້ນກົຽວລັ່ງກໍຂຶ້ນມື້ນີ້ ວັນນີ້ ພະອາທິດຂຶ້ນຟ້າກ້ຳຂວາ ກໍຂຶ້ນມື້ນີ້ວັນນີ້ ພະຈັນທາຂຶ້ນຟ້າກ້ຳຊ້າຍ ກໍຂຶ້ນມື້ນີ້ວັນນີ້ ພະຍາໃຫຍ່ຍ້າຍກົງແກ້ວຍໍພົນ ກໍຍໍມື້ນີ້ວັນນີ້. ຕູຂ້າທັງຫລາຍ ຈຶ່ງພ້ອມກັນມາເບີກລາບາສີເຈົ້າສິກໃໝ່. ປັ້ນເຂົ້າໄຮກັບປາອ້ອຍກໍໄດ້ມານີ້ແລ້ວ ປັ້ນເຂົ້ານາກັບໄຂ່ອ້ອຍກໍໄດ້ມານີ້ແລ້ວ. ເຂົ້າຕົ້ມໃສ່ເຕັມພາເຫລົ້າອົມແຂງໃສ່ກ້ອງແກ້ວ ຕົກແຕ່ງແລ້ວຈຶ່ງຍໍມາ ນີ້ແລ້ວ. ມີທັງໝາກອຳພາຫອມຮ່ວງເຮົ້າ ເຄື່ອງເບີກລາບາສີເຈົ້າມີມາກເຫລືອຫລາຍ ຝູງຕານາຍ ແລະ ເຖົ້າແກ່ ທັງພໍ່ແມ່ ແລະ ປານກາງ ທັງສາວຣານ ແລະ ຊາຍໜຸ່ມ ໜ້າຊ້ອຍຊຸ່ມເຜີງແຜງ ພ້ອມກັນມາຍໍພາຂວັນ ເບື້ອງຂວາຢູ່ລີລ້າຍໆ ພ້ອມກັນມາຍໍພາຂວັນ ເບື້ອງຊ້າຍຢູ່ຊອນລອນ ໆ ຝູງຂ້າພ້ອມກັນມາຖວາຍພອນອັນດີ ແລະ ວິເສດ ມີໃນເຂດປະເທດທ້ອງເມືອງສະຫວັນ ວ່າມາເຢີຂວັນເອີຍ !

ຂວັນເຈົ້າໄປ ຢູ່ສວນທ້ອມນຳນາງອານ ກໍໃຫ້ມາ ມື້ນີ້ ວັນນີ້
ຂວັນເຈົ້າໄປຢູ່ສວນຄາມ ນຳນາງໄອ່ ກໍໃຫ້ມາສາ ມື້ນີ້ ວັນນີ້
ຂວັນຫົວເຈົ້າໄປຢູ່ຊົ້ນໄມ້ຕົ້ນໃຫຍ່ຕາຍພາຍ ກໍໃຫ້ມາສາ ມື້ນີ້ ວັນນີ້
ຂວັນຫົວເຈົ້າໄປຢູ່ລີ້ ນຳຫົວຫວາຍປົ່ງຍອດ ກໍໃຫ້ມາສາ ມື້ນີ້ ວັນນີ້
ມາຮອດແລ້ວ ໃຫ້ເຈົ້າມານັ່ງລ້ອມພາເຂົ້າ ແລະ ພາຫວານ
ໃຫ້ເຈົ້າກິນອາຫານແຊບຊ້ອຍ ກິນນ້ຳອ້ອຍ ແລະ ຂອງຫວານ
ໃຫ້ເຈົ້າມາກິນນ້ຳຕານ ແລະ ນ້ຳເຜີ້ງ ຝູງເຖົ້າແກ່ ແລະ ໃຫຍ່ນ້ອຍ
ຜໍໄດ້ເພິ່ງປາຣາມີ ວ່າມາເຢີ ຂວັນເອີຍ !
ມາຮອດແລ້ວ ໃຫ້ເຈົ້າມີອາຍຸຍືນຍາວຍິ່ງ ໃຫ້ເຈົ້າໄດ້ແກ້ວກິ່ງຊາຍາ
ບຸນນຳພາແຜ່ກວ້າງ ຢູ່ສືບສ້າງປະເທດຊາດສາທາ ໆລງ
ຝູງປະຊາຍໍຍ້ອງ ບໍ່ໄດ້ຕ້ອງໂທດຮ້າຍໂພຍໄພ
ໄຊຍະຕຸພະວັງ ໄຊຍະມັງຄະລະ ສັພພະໂສດຖີ ດັ່ງນີ້ເທີ້ນ ສາທຸ./.

# ສົ່ງຮອມ ການເຄື່ອນໄຫວ

✍ *ຈັນສະໝຸດ ທິລະກຸນ*



" **ຫລວງພະບາງ, ບ້ານຜາ ເມືອງພູ ອູ່ໃບລານລ້ານຊ້າງ** "

ຫລາຍໆຄົນຄົງຈະໄດ້ຍິນສຸພາສິດທີ່ວ່າ: "**ແກ້ວບໍ່ ຝັດສານບໍ່ເປັນແຮ່ ຜີ່ນ້ອງບໍ່ແວ່ສານ ບໍ່ເປັນເຜີ່ນ**" ເປັນຄະຕິ ຄຳສອນ ຂອງບັນພະບູລຸດເຮົາ ທີ່ຍັງໃຊ້ໄດ້ໃນ ທຸກຍຸກ ທຸກສະໄໝ. ຫລວງ ພະບາງນອກຈາກ ຈະມີວັດວາອາຮາມ ແລະ ສະຖານທີ່ທາງ ປະຫວັດສາດຫລາຍໆແຫ່ງ ທີ່ມີຄວາມສຳຄັນທາງວັດທະນະທຳແລ້ວ ໜັງສືໃບລານທີ່ມີຢູ່ຕາມວັດແຫ່ງຕ່າງໆຍັງແມ່ນ ແກ້ວມະນີດວງ ປະເສີດ ທີ່ມີຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈ ຂອງຊາວຫລວງພະບາງກໍ່ຄືຂອງຊາດ ທີ່ພວມໄດ້ຮັບການຜັດສີໃຫ້ກ້ຽງມື່ນ ຈັ່ງຊັ້ນ ໃນຕົ້ນເດືອນຕຸລາ 1994 **ນາງດາລາ ກັນລະຍາ** ຫົວໜ້າໂຄງການ, **ທ່ານສາສະດາຈານ ດຣ. ຣາຣັນ ຣຸນດິອຸສ** ທີ່ປຶກສາກິຕິມະສັກ ຂອງໂຄງການ ພ້ອມດ້ວຍຄະນະໄດ້ເດີນທາງໄປທີ່ແຂວງຫລວງພະບາງ ເພື່ອຢ້ຽມຢາມວຽກງານການປົກປັກຮັກສາໜັງສື ໃບລານ.

ພໍມາຮອດ ທ່ານຫົວໜ້າໂຄງການພ້ອມຄະນະ ເລີ່ມຕົ້ນການຢ້ຽມຢາມຖາມຂ່າວ ດ້ວຍການເຂົ້າຮ່ວມພິທີສະຫລຸບການສຳຫລວດໜັງສືໃບລານວັດຊຽງທອງ ທີ່ໄດ້ດຳເນີນການສຳຫລວດມາເປັນເວລາ 15 ວັນ.

**ວັດຊຽງທອງ** ເປັນວັດທີ່ທົ່ວໂລກຂະໜານນາມວ່າ "**ເພັດແຫ່ງສະຖາປັດຕະຍະກຳລາວ**" ຕັ້ງຢູ່ບໍລິເວນທາງທິດຕາເວັນອອກ ສຽງເໜືອຂອງຕົວເມືອງຫລວງພະບາງ ບ່ອນທີ່ແມ່ນ້ຳຄານໄຫລມາພົບກັບແມ່ນ້ຳຂອງ. ສັນນິຖານວ່າ ວັດຊຽງທອງ ສ້າງຂຶ້ນໃນປີ 1560-1561 ໃນສະໄໝພະເຈົ້າໄຊຍະເສດຖາທິລາດ ກ່ອນໜ້າທີ່ພະອົງຍ້າຍເມືອງຫລວງ ລົງມາຢູ່ວຽງຈັນ . ໃນໄລຍະຫລັງ ວັດຊຽງທອງ ຍັງໄດ້ຮັບການອຸປະຖຳຈາກເຈົ້າມະຫາຊີວິດສີສະຫວ່າງວົງ ແລະ ເຈົ້າມະຫາຊີວິດສີສະຫວ່າງວັດທະນາ ຈຶ່ງເຮັດໃຫ້ຊາວຫລວງພະບາງ ຖືເປັນວັດມິ່ງບ້ານ ຂວັນເມືອງ ແລະ ກາຍເປັນຈຸດລວມຂອງປະເພນີ ພິທີກຳຕ່າງໆ ເຊັ່ນ : ປະເພນີບຸນປີໃໝ່ລາວ ທຸກໆປີຊາວຫລວງພະບາງຈະແຫ່ຂະບວນນາງສັງຂານ ຈາກວັດທາດອອກໄປຫາວັດຊຽງທອງ, ປະເພນີບຸນໄຫລເຮືອໄຟ ມີການເຕົ້າໂຮມເຮືອໄຟຂອງແຕ່ລະຄຸ້ມບ້ານ ມາໄວ້ທີ່ວັດຊຽງທອງແລ້ວຈຶ່ງແຫ່ລົງສູ່ທ່ານ້ຳ. ພິເສດ ປະຊາຊົນຢູ່ເຂດນີ້ ເຄີຍມີມູນເຊື້ອໃນການສະແດງລະຄອນ ອີປ໊ອກ, ມາຮອດປັດຈຸບັນພວມຈະໄດ້ຮັບການຟື້ນຟູຄືນອີກ. ຢູ່ທີ່ນີ້ ມີໜັງສືໃບລານທີ່ໄດ້ ສຳຫລວດກວດນັບ 2045 ຜູກ ມີເອກະສານ ທີ່ສຳຄັນຫລາຍເລື່ອງ ເຊັ່ນ : **ມັງຄະລາທິພ, ສີລະຂັນທະວັກ, ເສນາສະນະຂັນວິນິໄສ** ມີອາຍຸເຖິງ 100-200 ກວ່າປີ ນອກນັ້ນ ຍັງພົບພັບສາຈຳນວນໜຶ່ງ ບັນທຶກເປັນຕົວລາວ.

➡

➡

ໄທ ແລະ ຂະເໝນ ຢູ່ໃນສະພາບທີ່ຕົກໂນະ, ຕິດກັນເປັນແຜ່ນຈົນອ່ານບໍ່ອອກ ຍ້ອນຖືກຝົນຮົ່ວໃສ່ມາເປັນເວລາດົນ. ສາທຸຄຳນ້າວ ເຈົ້າອະທິການ ວັດພູມີສີມີໃບການກໍ່ສ້າງ ແລະ ສ້ອມແປງວັດມາຫລາຍແຫ່ງ ແລະ ທັງເປັນປະທານ ພ.ສ.ລ. ເມືອງ ໄດ້ເວົ້າເຖິງຄວາມເປັນມາ "**ພັບສາຈຳນວນນີ້ແຕ່ກ່ອນແມ່ນເປັນຂອງສາທຸພໍ່ຈານສີ ເປັນ ຫມໍມໍ ທີ່ມີຊື່ສຽງ, ກ່ອນເພິ່ນຈະຕາຍ ໄດ້ມອບໃຫ້ທິດຫນູອວຜູ້ເປັນລູກ, ທິດຫນູອວກໍມອບໃຫ້ຫລານ ຕົນເອງຕໍ່ ຜູ້ເປັນຫລານໄດ້ຮັບພັບສານີ້ໄວ້ ກໍ່ເກີດເຈັບເປັນຢູ່ເລື້ອຍໆ. ຜູ້ເປັນຫລານຂອງທິດຫນູອວ ຈຶ່ງໄດ້ນຳມາມອບໃຫ້ແກ່ອາຕະມາດູແລ...**" ເມື່ອຖາມ ເຖິງການປົກປັກ ຮັກສາຫນັງສືໃບລານ ໃນໄລຍະຜ່ານມາ ສາທຸຄຳນ້າວໄດ້ເວົ້າຕື່ມ "**ສຳຫລັບ ຫນັງສືໃບລານທຸກຜູກ ທຸກມັດ ແມ່ນໄດ້ມີການຂຶ້ນບັນຊີໄວ້ຫມົດກ່ອນຫນ້ານີ້ຫລາຍປີ ເພາະໄດ້ຍິນຂ່າວວ່າ ເພິ່ນໃຫ້ມີການປົກປັກຮັກສາ ໂດຍມີ ສາທຸຄຳພັນ ພ້ອມດ້ວຍພະສົງຈາກ ວັດສີລິມາຊ່ອຍ ແລະ ກໍ່ເກັບມ້ຽນໄວ້ໃນຕູ້ມີກະແຈໃສ່ແຕ່ກໍ່ເຮັດໄປຕາມມີຕາມເກີດ, ບໍ່ມີວິຊາການຄືແນວນີ້...**" ພໍໄດ້ຍິນແນວນີ້ ຫນ່ວຍສຳຫລວດພາກັນເວົ້າຂຶ້ນ " ສົມພໍດອກ ຫນັງສືຈຶ່ງເປັນລະບຽບ ເປັນເລື່ອງດີ " ກ່ອນຈາກໄປ **ນາງດາລາ ກັນລະຍາ** ຫົວຫນ້າໂຄງການ ໄດ້ຝາກຄວາມຫວັງໄວ້ກັບພະສົງສາມະເນນ ແລະ ຊາວບ້ານຊຽງທອງທຸກຄົນຈົ່ງສືບຕໍ່ ອະນຸລັກຮັກສາມໍລະດົກ ເຫລົ່ານີ້ໄວ້ ເພື່ອເລືອກເຟັ້ນອອກມາສຶກສາເປັນແບບຢ່າງໃຫ້ແກ່ລູກຫລານ.

ຫລັງຈາກນັ້ນ ຫນ່ວຍສຳຫລວດ ນຳໂດຍ **ທ່ານ ບຸນຍົກ ແສນສູນທອນ** ກັບມາເຄື່ອນໄຫວວຽກງານ ທີ່ວັດໃຫມ່ສຸວັນນະພູມາຣາມ ເປັນເທື່ອທີ 2 ຫນັງສືໃບລານ ທີ່ສຳຫລວດນີ້ເປັນສົມບັດເກົ່າແກ່ ຂອງອະດີດສົມເດັດພະສັງຄະລາດ ສ່ວນຫລາຍບັນທຶກດ້ວຍຕົວອັກສອນທຳຍວນ, ລ້ານນາ, ຂອມ ແລະ ລື້. ເອກະສານຖືກບັນຈຸໄວ້ໃນຕູ້ໄມ້ ສ່ວນຫລາຍແຕກມັດຊະຊາຍ, ບໍ່ມີ ໄມ້ປະກັບ.

**ຈາກຫລວງພະບາງ ສູ່ໄຊຍະບູລີ ສີສັນ ແຫ່ງທຳມະຊາດ ແລະ ຄວາມອຸດົມ**

ພາຍຫລັງທີ່ **ນາງດາລາ ກັນລະຍາ** ແລະ **ທ່ານ ສາສະດາຈານ ຮາຣັນ ຮຸນດິອຸສ** ຢ້ຽມ ຢາມການປະຕິບັດງານ ຂອງຫນ່ວຍສຳຫລວດຢູ່ວັດໃຫມ່ແລ້ວ ກໍ່ອອກເດີນທາງໄປແຂວງໄຊຍະບູລີ ເພື່ອຢ້ຽມຢາມເບິ່ງສະພາບຫນັງສືໃບລານ ທີ່ໄດ້ສຳຫລວດ ແລະ ປົກປັກຮັກສາ ໃນເດືອນ ກໍລະກົດ ແລະ ສິງຫາ 1994 ຜ່ານມາ.




ເມື່ອໄປຮອດ ກໍ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ຈາກ **ທ່ານ ທອງສຸກ ໄຊຍະລາດ** ຫົວຫນ້າ ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ພ້ອມດ້ວຍຄະນະ. ໃນໂອກາດນີ້ ຄະນະທັງຫມົດ ໄດ້ເຂົ້າຢ້ຽມຢາມຄຳນັບ **ທ່ານ ບຸນເຮືອງ ດວງພະຈັນ** ເຈົ້າແຂວງໄຊຍະບູລີ ເຊິ່ງເພິ່ນໄດ້ສະແດງຄວາມຮູ້ສຶກປິຕິຍິນດີ, ໂອ້ລົມກັບທາງຄະນະດ້ວຍ ຄວາມເປັນກັນເອງວ່າ" **ການທີ່ໂຄງການ ປົກປັກຮັກສາຫນັງສືໃບລານລາວ ໄດ້ມາຮອດມາເຖິງພວກເຮົາ ຖືວ່າເປັນຈຸດເລີ່ມຕົ້ນທີ່ສຳຄັນ ຂອງການປົກປັກຮັກສາວັດທະນະທຳແຂວງໄຊຍະບູລີ ທີ່ປະຊາຊົນເຮົາໄດ້ມີສ່ວນ**

**ຮ່ວມດ້ວຍຄວາມ ພໍອົກພໍໃຈ ພວກເຮົາຖືວ່າ ເປັນໜ້າທີ່ອັນມີກຽດ...**"

ຈຸດເລີ່ມຕົ້ນທີ່ຄະນະໂຄງການ ລົງປັ້ນຍາມ ໄດ້ແກ່ ວັດສີບຸນເຮືອງ ເປັນວັດເຄົ້າວັດມູນ ເປັນທີ່ສັກກາລະບູຊາ ຂອງຊາວເມືອງໄຊຍະບູລີ ໂດຍມີ**ສາທຸວຽງແກ້ວ** ເຈົ້າອະທິການວັດ ພ້ອມທັງ ເປັນຄະນະ ພ.ສ.ລ. ແຂວງ ແລະ ຄະນະສຶກສາສົງແຂວງ ຜູ້ທ້າວທັນ ພ້ອມດ້ວຍ ເຖົ້າແກ່ອາວຸໂສ ມາຕ້ອນຮັບເຕັມສາລາໂຮງທຳ **ລຸງພູມີເດດ** ແນວໂຮມບ້ານ ໂອ້ລົມດ້ວຍສີໜ້າ ຍິ້ມແຍ້ມວ່າ "**ຫລັງຈາກທີ່ໂຄງການໄດ້ມານຳພາໃນການປົກປັກຮັກສາແລ້ວ ພວກເຮົາກໍ່ເຫັນຄຸນຄ່າຫລາຍຂຶ້ນ, ທາງຝ່າຍພະສົງ ແລະ ຄາລະວາດກໍ່ໄດ້ມີການປຶກສາຫາລືກັນ ເພື່ອຊອກວິທີໃນການນຳໃຊ້ໃບລານໃຫ້ເປັນປະໂຫຍດ ໂດຍໃຫ້ ພະເນນຂອງພວກເຮົາຮ່ຳຮຽນຕົວທຳ ແລະ ຮູ້ສຶກວ່າ ພະສົງເພິ່ນກໍ່ສົນໃຈຢາກຈະຄົ້ນຄວ້າຮ່ຳຮຽນຫລາຍຂຶ້ນ**" ພໍແຕ່ພໍ່ລຸງແນວໂຮມເວົ້າສຸດ ທຸກຄົນກໍ່ ພາກັນຕົບມືໃຫ້ ຕໍ່ການກະທຳອັນດີງາມດັ່ງກ່າວ ໂດຍສະເພາະທ່ານ **ສາສະດາຈານ ຮະຮັນ ຮຸນດີອຸສ** ກໍ່ໄດ້ສະແດງ ຄວາມດີໃຈທີ່ໂຄງການໄດ້ມີສ່ວນຊຸກຍູ້ໃຫ້ຊາວບ້ານ ແລະ ພະສົງໄດ້ນຳໃຊ້ໃບລານຢ່າງກວ້າງຂວາງ.



*ຊຽງປານ, ອາຍຸ 72 ປີ, ສິລະປິນຣຸ່ນອະວຸໂສ ຜູ້ມີຄວາມສາມາດຕັ້ງເປັນຕົວໜ້າວົງດົນຕີພື້ນເມືອງ, ບ້ານທ່າເດື່ອ, ເມືອງແລະແຂວງໄຊຍະບູລີ*

**ທ່ານ ຄຳມ້າວ ກັນຍາວົງ** ຮອງຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ໄດ້ປະກອບຄຳເຫັນທີ່ໜ້າສົນໃຈ : "**ຫວ່າງມໍ່ໆມານີ້ ກໍ່ມີຄົນມາຂໍໜັງສືໃບລານນຳວັດບ້ານນີ້ ແຕ່ຍ້ອນໂຄງການໃບລານໄດ້ມາປຸກລຸກສະຕິຕື່ນຕົວຂອງປະຊາຊົນ ແລະ ພະສົງພວກເຮົາຈຶ່ງບໍ່ຍອມໃຫ້.**" ນີ້ກໍ່ເປັນຕົວຢ່າງອັນໜຶ່ງທີ່ໄທເຮົາເຈົ້າຂ້ອຍຄວນມີສະຕິ ແລະ ເປັນເຈົ້າການນຳກັນ.

**ວັດສີສະຫວ່າງວົງ** ເປັນວັດທີສອງ ທີ່ຄະນະພວກເຮົາໄດ້ໄປປັ້ນຍາມ ນອກຈາກຈະສົນ ທະນາ ກັບຜູ້ເຖົ້າຜູ້ແກ່ທີ່ມາຕ້ອນຮັບແລ້ວ **ນາງດາລາ ກັນລະຍາ** ແລະ **ທ່ານສາສະດາຈານ ດຣ. ຮະຮັນ ຮຸນດີອຸສ** ຍັງໄດ້ໂອ້ລົມກັບພະເນນຈາກໂຮງຮຽນມັດທະຍົມສົງ 70 ກວ່າອົງ. **ທ່ານ ສາສະດາຈານ ດຣ. ຮະຮັນ ຮຸນດີອຸສ** ໄດ້ຝາກຄຳເຫັນທີ່ໜ້າຄິດ "**ຫລາຍໆຄົນ ອາດຈະຕັ້ງ ຄຳຖາມວ່າ : ເປັນຫຍັງຈະຕ້ອງມາໃຊ້ເວລາໃນການຮຽນຕົວໜັງສືທຳ ເຊິ່ງມັນກາຍ ເປັນໜັງສືບູຮານທີ່ຖືກລືມໄປແລ້ວ, ແຕ່ວ່າ ໜັງສືເຫລົ່ານີ້ຂຽນດ້ວຍເຫື່ອແຮງຂອງບັນພະບຸລຸດ ໃນສະໄໝ ທີ່ຍັງບໍ່ມີໄຟຟ້າ, ບໍ່ທັນມີວິທະຍາການສະໄໝໃໝ່ ແຕ່ເພິ່ນກໍ່ອົດທົນຂີດຂຽນລົງໃນໃບລານແຕ່ລະບັນທັດ, ແຕ່ລະໜ້າຈົນກາຍເປັນຜູກ, ເປັນມັດ ທີ່ມີເນື້ອໃນສະທ້ອນໃຫ້ເຫັນພູມປັນຍາຂອງນັກປາດລາວ... ຂ້າພະເຈົ້າ ຄິດວ່າມໍລະດົກຂອງລາວໜ້າຈະແມ່ນໜ້າທີ່ຂອງຄົນລາວເອງນຳມາຄົ້ນຄວ້າ ເພື່ອໃຫ້ເພື່ອນຮ່ວມຊາດເຂົ້າໃຈເນື້ອໃນໜັງສືເຫລົ່ານີ້ຢ່າງເລິກເຊິ່ງ...**"

**ບ້ານນາຫລາ** ແລະ **ບ້ານນາທ່ອນ** ເປັນເຂດທີ່ຊົນເຜົ່າຍວນອາໄສຢູ່ ສິ່ງທີ່ຍຶດຖືຈິດໃຈຂອງ ພວກຂະເຈົ້າ

➡

ມາຕະຫລອດກໍ່ຄື ພຸດທະສາສະໜາ. ຄະນະພວກເຮົາໄດ້ມີໂອກາດໄປຢ້ຽມຢາມ ໄດ້ສຳພັດກັບສຽງອ່ານໜັງສືໃບລານ ທຳນອງຊົນເຜົ່າຍວນ ຈາກ**ໜານບຸນເຮືອງ** ໃນບາງຕອນ ຂອງເລື່ອງ **ອິນທະນິນ** ເຊິ່ງສ້າງຄວາມປະທັບໃຈ ໃຫ້ກັບຄະນະຂອງພວກເຮົາ ໂດຍສະເພາະແມ່ນ**ທ່ານ ສາສະດາຈານ ດຣ. ຮະຣັນ ຮຸນດີອຸສ** ທີ່ຢາກຟັງມາດົນແລ້ວ. ບ້ານນາຫລາ ແລະ ບ້ານນາທ່ອນ ຍັງມີນັກອ່ານໜັງສືໃບລານ ທີ່ສຽງດີອີກຫລາຍຄົນ ແລະມີນັກຈ້ອຍ, ນັກຊໍ່ ແລະ ນັກດົນຕີພື້ນເມືອງ ທີ່ມີຄວາມສາມາດອີກຫລາຍທ່ານ.

ນອກຈາກຈະພາຄະນະ ພວກເຮົາຢ້ຽມຢາມວັດຕ່າງໆ ແລະ ໂອ້ລົມກັບພະສົງ ແລະ ຊາວບ້ານແລ້ວ **ທ່ານຄຳໝ້າວ ກັນຍາວົງ** ຮອງຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ແລະ **ທ່ານ ທອງຜັດ** ຫົວໜ້າວັດທະນະທຳເມືອງ ຍັງໄດ້ ພາຄະນະຂອງພວກ ເຮົາທ່ຽວຊົມທຳມະຊາດຂອງເມືອງໄຊຍະ ແລະ ເມືອງພຽງ ເຮັດໃຫ້ຫລາຍໆຄົນຄິດຮອດສາຊາວໄຊຍະບູລີທີ່ມີດິນແດນອັນອຸດົມສົມບູນສະອາດ ມີອາກາດອັນບໍລິສຸດ ປາສະຈາກຄວັນພິດ ແລະເຂົາເຈົ້າກໍ່ເປັນເຈົ້າການໃນການປົກປັກຮັກສາ.ຢູ່ຕາມຕົ້ນໄມ້, ສະຖານທີ່ທ່ອງທ່ຽວ ມີປ້າຍເຊີນຊວນໃນການອະນຸລັກ ທີ່ເປັນຄະຕິເຕືອນໃຈໃຫ້ທຸກຄົນ ຮ່ວມມືກັນ ເຊັ່ນ :

**"ຢ່າຖາງດົງ ໃຫ້ເປັນປ່າຫຍ້າ, ຢ່າລ່າເນື້ອ, ເພື່ອເປັນສິນຄ້າ"**

**"ປ່າໄມ້ຄືເພື່ອນມິດ ຢ່າຄິດທຳລາຍ"**

**"ມີນ້ຳຍ້ອນປ່າປົກ ນ້ຳບົກຍ້ອນຂາດໄມ້"**



**ວັດສັກກະລິນທະຄູຫາ** ບ້ານທ່າເດື່ອເປັນບ່ອນໜຶ່ງທີ່ສ້າງຄວາມປະທັບໃຈໃຫ້ກັບຄະນະ ຂອງພວກເຮົາ ເພາະບ້ານນີ້ນອກຈາກຈະມີວັດທີ່ສວຍງາມ ແລະ ມີໜັງສືໃບລານທີ່ເກົ່າແກ່ແລ້ວ ຍັງມີນັກເທດນັກສູດ ນັກເລົ່ານິທານ ແລະຄະນະສິລະປະພື້ນເມືອງ ນັບແຕ່ໝໍອັບ, ນັກອ່ານໜັງສື, ນັກດົນຕີພື້ນເມືອງ . ກ່ອນຈະຈາກໄປ ຫົວໜ້າໂຄງການຍັງໄດ້ຝາກຄຳຄິດຄຳເຫັນ ໃຫ້ກັບເຖົ້າແກ່ແນວໂຮມ **"ຢາກໃຫ້ມີການ ຈານໃບລານຕື່ມອີກ ມາເບິ່ງແລ້ວໜັງສືໃບລານ ນັບມື້ນັບໜ້ອຍລົງ ມັນຄ້າຍໆກັບວ່າ ກະແສວັດທະນະທຳການເທດ ການຟັງທັມ ທຸກມື້ນີ້ ກຳລັງ ຈະຫັນໄປໃຊ້ປຶ້ມຫລາຍກວ່າ."**

ກ່ອນຈະອຳລາໄປ ຄະນະຂອງພວກເຮົາໄດ້ໃຫ້ ສັນຍາວ່າ ຈະກັບມາດິນແດນແຫ່ງນີ້ອີກ ເພື່ອປົກປັກ ຮັກສາໜັງສືໃບລານ ໃນເມືອງບໍ່ແຕນ, ແກ່ນທ້າວ ຕາມຄວາມຄອງຄອຍຂອງປະຊາຊົນ.

ອີກບໍ່ດົນ ! ນົບສະເໜນແຫ່ງສີສັນຂອງຄວາມອຸດົມເອີຍ !

**ຈາກນ້ຳອູ ສູ່ອຸດົມໄຊ**

ເປັນເວລາ 5 ວັນ ທີ່ຄະນະພວກເຮົາ ນຳໂດຍ **ນາງ ດາລາ ກັນລະຍາ, ທ່ານສາສະດາຈານ ດຣ. ຮະຣັນ ຮຸນດີອຸສ** ເດີນທາງໄປທີ່ແຂວງໄຊຍະບູລີ ໂດຍທາງເຮືອ ເພື່ອເກັບກຳຂໍ້ມູນເບື້ອງຕົ້ນ ກ່ອນທີ່ຈະມີການສຳຫລວດ

ຂຶ້ນໃນໄວໆນີ້ ຄະນະໄດ້ຢ້ຽມຢາມວັດຕ່າງໆ ຢູ່ເທດສະບານເມືອງໄຊ ແລະ ເມືອງຫລາຈຳນວນໜຶ່ງ ເຫັນວ່າຈຳນວນເອກະສານບໍ່ມີຫລາຍ ແຕ່ລ້ວນຮີບຮ້ອນປົກປັກຮັກສາກ່ອນຈະເສຍຫາຍໄປໝົດ. ຕະຫລອດ 5 ວັນ ຄະນະພວກເຮົາໄດ້ຮັບການຕ້ອນຮັບ ແບບເປັນກັນເອງ ທ່ານ **ຄຳຜາຍ ເພັດໄຊສີ** ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ພ້ອມຄະນະ, ແລະອຳນາດການປົກຄອງທຸກຂັ້ນ. ໃນມື້ສຸດທ້າຍ ຄະນະຍັງໄດ້ເຂົ້າພົບ **ທ່ານ ໄຊ ເຊັງລີ ເຕັງເບຼຍຈື** ເຈົ້າແຂວງ ແຂວງອຸດົມໄຊ ກ່ອນຈະອຳລາໄປ.



*ການອະນາໄມໜັງສືໃບລານຂອງຊາວບ້ານນາແລ, ເມືອງໄຊ, ແຂວງອຸດົມໄຊ*

ຕົ້ນເດືອນທັນວາ 1994 ໜ່ວຍສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ ນຳໂດຍ **ທ່ານສຸວັນ ທິລະວົງ** ສົມທົບກັບວິຊາການຂອງແຂວງ ປະກອບດ້ວຍ **ທ່ານ ພອນສະຫວັນ** ຮອງຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງອຸດົມໄຊ, **ທ່ານ ວັນນາ** ພະນັກງານຈາກຫ້ອງການຕ່າງປະເທດຂອງແຂວງ ແລະ ພະນັກງານຈາກວັດທະນະທຳເມືອງ ຮ່ວມມືກັບອຸທິດຕົນໃຫ້ແກ່ໜ້າທີ່ອັນມີກຽດນີ້.

ການເປີດບັ້ນສຳຫລວດ ເປັນຄັ້ງປະຖົມມະລືກ ໄດ້ຈັດຂຶ້ນຢູ່ວັດພູແຄ ບ້ານຖິ່ນ, ຕັ້ງຢູ່ເທສະບານເມືອງໄຊ, ປະຊາຊົນສ່ວນຫລາຍເປັນຊົນເຜົ່າລື້, ນອກນັ້ນ ກໍ່ມີຊົນເຜົ່ານ້ຳໄທດຳ , ຂະມຸ.

ພິທີເປີດບັ້ນການສຳຫລວດ ເປັນຄັ້ງປະຫວັດສາດ ມີແຂກຄົນເຂົ້າຮ່ວມມາກໜ້າຫລາຍຕາ ເຊັ່ນ : **ທ່ານ ຄຳຜາຍ ເພັດໄຊສີ** ຫົວໜ້າ ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ ຜູ້ທ້າວທັນ, **ທ່ານ ໄມພົມ ໄຕສະຫວາດ** ຮອງເຈົ້າເມືອງໆໄຊ **ທ່ານ ຈັນເພັງ ເພັດມະນີ** ປະທານແນວລາວສ້າງຊາດແຂວງ ພະສົງ ແລະ ຊາວບ້ານກໍເຂົ້າຮ່ວມຢ່າງຫລວງຫລາຍ ເມື່ອຮູ້ແຈ້ງເຫັນຈິງເຖິງຈຸດປະສົງຂອງໂຄງການແລ້ວ ຜູ້ເຖົ້າຜູ້ແກ່ຫລາຍຄົນກໍ່ເວົ້າເປັນສຽງດຽວກັນວ່າ : " **ບໍ່ຄິດວ່າຈະໄດ້ມີການຟື້ນຟູຄືນ, ພວກເຮົາດີໃຈຂະໜາດ** " ຜູ້ເຖົ້າຜູ້ແກ່ຫລາຍຄົນໄດ້ນຳເອົາພັບສາທີ່ມີ ຢູ່ໃນບ້ານ ໃນເຮືອນຂອງຕົນມາອະນາໄມ ເຊັດຖູ ໃຫ້ໜ່ວຍສຳຫລວດຂຶ້ນທະບຽນ ເອກະສານສ່ວນຫລາຍ ບັນທຶກດ້ວຍຕົວທຳລື້, ຊຳລຸດກຸດທຽນໄປຫລາຍ ຍ້ອນວັດນີ້ຖືກສົງຄາມທຳລາຍໃນປີ 1968. ແຕ່ກໍ່ຍັງພົບເຫັນໜັງສືທາງວັນນະຄະດີຫລາຍເລື່ອງ ເຊັ່ນ : **ກາຍ່ອມ, ທ້າວແສງເມືອງ ນາງຂີນໃຈ, ທົ່ງຜາຄຳ**. ການສຳຫລວດດຳເນີນໄປ 3 ວັນ ສາມາດສຳຫລວດກວດນັບໄດ້ 816 ຜູກ, 21 ມັດ ແລະ ຍັງພົບເຫັນພັບສາອີກຈຳນວນໜຶ່ງ.

➡

➡

ບັນຍາກາດໃນມື້ສະຫລຸບຄຶກຄື້ນເປັນພິເສດ ເພາະວ່າເປັນບັນຍາກາດໃຫມ່ ທີ່ທຸກຄົນໄດ້ສ້າງຂຶ້ນມາ ປະຊາຊົນ ນັບທັງຜູ້ເຖົ້າຜູ້ແກ່ ຊາວຫນຸ່ມຍິງສາວ 200 ກວ່າຄົນ ມາໂຮມກັນເຕັມສິມ ພາກັນແຕ່ຫນັງສືທຳດ້ວຍໃບຫນ້າທີ່ເບີກບານ, ດົນຕີພື້ນເມືອງບັນເລງໄປຕາມທຳນອງສຽງອັບ, ສຽງ ຮ້ອງເພງ ເຫມືອນກັບ ເປັນປາງບຸນໃຫຍ່ ໃນຊີວິດຂອງເຂົາເຈົ້າ. ທຸກຄົນຖືວ່າ ນີ້ແມ່ນການປະກອບສ່ວນເຮັດບຸນກຸສົນ ເພື່ອເປັນສິລິມຸງຄຸນແກ່ຊີວິດຂອງພວກເຂົາ.

ຂ່າວຄາວ ການຟື້ນຟູຫນັງສືໃບລານ ກໍ່ດັ່ງດັງໄປບ້ານອື່ນໆ ຊາວບ້ານທັງຫລາຍ ມີຄວາມຄອງຄອຍດ້ວຍໃຈຈົດຈໍ່ ທຳອິດທາງຫນ່ວຍສຳຫລວດ ໄດ້ຕົກລົງຈະຕັ້ງການສຳຫລວດ ຢູ່ຈຸດດຽວ ໂດຍເອົາຫນັງສືຈາກຫລາຍວັດມາໂຮມສຳຫລວດ ຢູ່ບ່ອນດຽວ ແຕ່ດ້ວຍຄວາມຮຽກຮ້ອງຂອງ ປະຊາຊົນ ທີ່ຢາກປະກອບສ່ວນເຮັດບຸນກຸສົນ ຢາກຈັບຢາກອະນາໄມຊ່ອຍ ເພື່ອເປັນສິລິມຸງຄຸນແກ່ຕົນເອງ ທາງຫນ່ວຍຈຶ່ງໄດ້ເຄື່ອນໄຫວສຳຫລວດ 13 ວັດ ທົ່ວເມືອງໄຊ.

ເອກະສານທີ່ພົບເຫັນ ມີທັງຫນັງສືໃບລານ ແລະ ພັບສາ ທີ່ຫລົງເຫລືອຈາກສົງຄາມ 1.300 ຜູກ, 151 ມັດ ສ່ວນຫລາຍຈະຊຳລຸດກຸດທ້ຽນ, ແຕກມັດແຕກຜູກ, ບາງວັດບໍ່ມີພະສົງ ກໍ່ເປັນພາລະຂອງຊາວບ້ານ ທີ່ປົກປັກຮັກສາຕາມມີຕາມເກີດ. ສ່ວນຫລາຍຈະບັນທຶກດ້ວຍຕົວທຳລື້ ແລະ ຕົວທຳລາວ ເພາະວ່າປະຊາຊົນເຂດເມືອງໄຊ ເປັນເຂດທີ່ມີຊົນເຜົ່າລື້ອາໄສຢູ່ຫລາຍ, ແລະ ກໍ່ມີລາວລຸ່ມເຜົ່າອື່ນໆ ຈຳນວນຫນຶ່ງ. ໃນເວລາທີ່ໂຄງການໄປຮອດໄປເຖິງຜູ້ທີ່ມີຫນັງສືໃບລານ, ພັບສາຢູ່ບ້ານເຮືອນຂອງຕົນ ກໍ່ພາກັນນຳເອົາເອກະສານເຫລົ່ານັ້ນ ອອກມາອະນາໄມ ເຊັດຖູ ແລະ ໃຫ້ທາງນັກວິຊາການຂຶ້ນທະບຽນ ເຊັ່ນ : **ໄມຄຳເສົາ**, **ຫນານຄຳ**, **ຫນານຄຳນວນ**, **ຫນານເລົາ**, **ໄມຕ້າວ** ບ້ານລ້ອງຢາ ເຊິ່ງມີເນື້ອໃນສຳຄັນເປັນ**ຕຳລາຢາ**, **ຕຳລາດູລືກຍາມ**ຕ່າງໆ ເຊັ່ນ : **ດູລືກຍາມ 12 ລາສີ**, **ດູລືກຟ້າ 27 ແລະ ປະຕິທິນກະດ້າງ**. ນອກນັ້ນ ຍັງມີນັກປາດອາຈານຫລາຍໆຄົນຈາກບ້ານໃຫມ່, ບ້ານນາຈາງ, ບ້ານເຈງ ກໍ່ໄດ້ນຳເອົາພັບສາທີ່ເກັບເອົາໄວ້ໃນຫີບໃນທໍ່ ອອກມາພັດສີ ແລະ ມາຂຶ້ນທະບຽນເປັນສົມບັດຂອງຊາດ ລວມມີທັງ



*ກຸຕິເກົ່າ ວັດລອງຄູນ ບ່ອນເກັບມ້ຽນຫນັງສືໃບລານ 2 ຕູ້ໃຫຍ່*
*( ສະພາບ ພາຍຫລັງໄດ້ຮັບການບູລະນະສ້ອມແປງແລ້ວ )*

**ຕຳລາຢາ**, **ໂຫລາສາດ**, **ປະເພນີ ພິທີກຳ**, **ເວດມົນ**, **ຄາຖາ**, **ນິທານພື້ນເມືອງ** ທີ່ຫນ້າສົນໃຈຫລາຍເລື່ອງ ເຊັ່ນ : ເລື່ອງ "**ຄວາມ ຂັບຂ່າວບົວລາ ຜະຫຍາບ່າວນ້ອຍ**" ເປັນຕົ້ນ.

ພິເສດ ຍັງມີຫນານ, ໄມ ຫລາຍໆຄົນ ທີ່ເຄີຍບວດ ເຄີຍຮຽນຍັງສາມາດຈານໃບລານເປັນ. ໂຄງການ ຂອງພວກເຮົາກໍ່ຢາກໃຫ້ມີການຟື້ນຟູຄືນ ເພາະຈະໄດ້ມີຫນັງສືໃບລານຫລາຍຂຶ້ນ ແຕ່ແຂວງອຸດົມໄຊບໍ່ຄ່ອຍມີຕົ້ນລານ ກໍ່ບໍ່ແມ່ນເຫລືອບ່າກວ່າແຮງຂອງພວກເຮົາດອກ ແມ່ນບໍ່ລະ ພໍ່ແມ່ພີ່ນ້ອງ ! ຊ່ວຍໆກັນປູກໃຫ້ເປັນດົງເປັນປ່າ ຈະໄດ້ມີໃບລານໄວ້ຈານໄວ້ໃຊ້ຈັ່ງໃດລະ !

໔໔ ວັນທີ່ດຳເນີນການສຳຫລວດກວດນັບຢູ່ເມືອງໄຊຈາກນັ້ນໜ່ວຍສຳຫລວດກໍ່ເຄື່ອນຍ້າຍໄປເມືອງປາກແບ່ງ ແລະ ເມືອງງາ, ອັນມີພິທີຕັ້ງຢູ່ແຄມແມ່ນ້ຳຂອງ. ປະຊາຊົນຢູ່ເຂດນີ້ ສ່ວນຫລາຍເປັນຊົນເຜົ່າລາວລຸ່ມ ແລະມີການນຳໃຊ້ໜັງສືໃບລານມາພ້ອມໆກັບການບັນຖືສາສະໜາພຸດ. ເອກະສານ ທີ່ພົບສ່ວນຫລາຍ ຄົງຕົວດ້ວຍຮູບຂອງໃບລານ ບັນທຶກເປັນຕົວທຳລາວ, ສ່ວນຫລາຍເປັນເລື່ອງທີ່ກ່ຽວກັບຊາດົກ ເຊັ່ນ : ເລື່ອງເວດສັນຕະຊາດົກ, ວິທູບັນດິດ...

ວັດວາເຄີຍຖືກສົງຄາມທຳລາຍ ໜັງສືຜູກໃບລານກໍ່ຖືກຊາຕາກຳອັນດຽວກັນ. ພະສົງ ແລະ ຊາວບ້ານໄດ້ຫອບເອົາສ່ວນທີ່ຍັງເຫລືອເຂົ້າໄປຊຸກເຊື່ອງໄວ້ຕາມຖ້ຳ, ຕາມພູ, ຕາມບ້ານເຮືອນ... ຕະຫລອດເວລາທີ່ປະຕິບັດວຽກງານ ໜ່ວຍສຳຫລວດໄດ້ ໂອ້ລົມນຳພໍ່ແມ່ປະຊາຊົນບອກກັບການດຳເນີນວິທີວິທະຍາ ໃນການປົກປັກຮັກສາຢ່າງຈິງຈັງ ຈຶ່ງເຮັດໃຫ້ພະສົງ ແລະ ຊາວບ້ານເຂົ້າໃຈສະໜັກນາ ຊ່ວຍວິຊາການຂອງພວກເຮົາ ເປັນຈຳນວນຫລວງຫລາຍ ເຕັມສາລາວັດ ຈານສົງ ອາຍຸ 60 ປີ ປະຊາຊົນບ້ານປາກເງີຍ ເມືອງປາກແບ່ງ ເວົ້າອອກມາໃນເວລາມາເຊັດຖູໃບລານ "**ຕັ້ງແຕ່ເກີດມາກໍ່ບໍ່ເຄີຍເຫັນຈັກເທື່ອ, ເຮີເຜີນມາພາສ້າງສາຈັ່ງຊີ້ແລ້ວ ພວກເຮົາກໍ່ຈະບົວລະບັດຮັດສີຕໍ່ໄປ...**"

ເປັນເວລາ 25 ວັນ ທີ່ໜ່ວຍສຳຫລວດເຄື່ອນໄຫວສຳຫລວດໃນສອງເມືອງ ສາມາດປົກປັກຮັກສາເອກະສານ 10 ວັດ ມີໜັງສືໃບລານທີ່ຂຶ້ນທະບຽນ 4120 ຜູກ ລວມ 231 ມັດ . ຫລັງຈາກນັ້ນ ກໍ່ມອບໃຫ້ພະສົງ ແລະ ຊາວບ້ານໃນແຕ່ລະທ້ອງຖິ່ນ ເປັນເຈົ້າການໃນການປົກປັກຮັກສາ ແລະ ນຳໃຊ້ໃຫ້ມີຊີວິດຊີວາຕໍ່ໄປ.

**ທ່ານ ຄຳຜາຍ ເພັດໄຊສີ** ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງອຸດົມໄຊ ຜູ້ທ້າວທັນສະແດງຄວາມເຫັນທີ່ເອກະສານສຳຄັນຂອງແຂວງໄດ້ຮັບການປົກປັກຮັກສາ "**ທາງ ແຂວງພວກເຮົາຖືວ່າເປັນບັນຫາໃໝ່, ເປັນວຽກໜຶ່ງທີ່ເດັ່ນໃນຂົງເຂດ ວຽກງານວັດທະນະທຳ ຂອງພວກເຮົາ**".

ການປົກປັກຮັກສາມໍລະດົກທາງພູມປັນຍາ ຂອງຊາວອຸດົມໄຊ ສຳເລັດລົງດ້ວຍຜົນທີ່ຈົບງາມ ດ້ວຍຄວາມຮ່ວມມືຮ່ວມໃຈ ຂອງທຸກພາກສ່ວນ ພະສົງ, ອຳນາດການປົກຄອງ ຕະຫລອດປະຊາຊົນທຸກຊັ້ນຄົນ ໄດ້ອຸທິດເຫື່ອແຮງດ້ວຍນ້ຳໃຈອັນບໍລິສຸດຂອງຕົນ ກາຍເປັນການກະທຳທີ່ຍິ່ງໃຫຍ່ ທີ່ຈະຕົກທອດໄປສູ່ລູກຫລານ ຂໍໃຫ້ບຸນກຸສົນນີ້ ຈົ່ງເປັນຂອງທຸກຄົນເຖີ້ນ.

## ສືບຕໍ່ປີທີ III

ໃນຂະນະທີ່ ໜ່ວຍ ສຳ ຫລວດ ຂອງໂຄງການເຄື່ອນໄຫວຢູ່ແຂວງອຸດົມໄຊ, ໜ່ວຍສຳຫລວດແຂວງຫລວງພະບາງ ນຳໂດຍທ່ານ **ອ່ອນຈັນ ສະໜອນ** ວິຊາການ ຜູ້ມີຄວາມສາມາດຈາກ ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງຫລວງພະບາງ ພ້ອມຄະນະໃຊ້ເວລາເດືອນປາຍ ສຳຫລວດຢູ່ວັດໃໝ່ສຸວັນນະພູມມາຣາມ ກໍ່ດຳເນີນການສຳຫລວດຢູ່ວັດລ່ອງຄູນ. ວັດລ່ອງຄູນ ຂຶ້ນກັບບ້ານ ຊຽງແມນ ເມືອງ ຈອມເພັດ ຕັ້ງຢູ່ຝັ່ງຂວາຂອງແມ່ນ້ຳຂອງ ກົງກັນຂ້າມກັບ ເມືອງຫລວງພະບາງ ແລະ ຈຸດທີ່ນ້ຳຄານປ່ອງໃສ່ນ້ຳຂອງ. ເປັນວັດໜຶ່ງທີ່ສຳຄັນຂອງແຂວງ ຫລວງພະບາງ ເພາະໃນເມື່ອກ່ອນ ເຈົ້າຊາຍທີ່ຈະຂຶ້ນເປັນເຈົ້າຊີວິດຈະຕ້ອງມາບວດຢູ່ວັດດັ່ງກ່າວ ເພື່ອຮ່ຳຮຽນທາງສູດທາງທຳ. ວັດນີ້

➡



*ທ່ານ **ອ່ອນຈັນສະໜອນ** ວິຊາການຈາກພະແນກ ຖະແຫລງຂ່າວ ແລະ ວັດທະນະທຳແຂວງຫລວງພະບາງ*

ຍັງມີ ລັກສະນະແປກກວ່າວັດອື່ນໆ ໃນຫລວງພະບາງ ປະກອບມີສິມ 1 ຫລັງ, ກຸຕິ 6 ຫລັງ ສາລາສັບເຂົ້າ 1 ຫລັງ ແລະ ຈັ່ງກົມ 1 ຫລັງ. ສ່ວນສິມໃຫຍ່ສ້າງຂຶ້ນໃນຊຸມສະຕະວັດທີ 18 ຮູບແຕ້ມຝາພະໜັງ ໃນສິມເປັນຮູບພະເຈົ້າສິບຊາດ. ຢູ່ຝາດ້ານນອກ ທາງໜ້າສິມມີຮູບແຕ້ມທະຫານຈີນ 2 ຄົນ ເຝົ້າປະຕູທາງເຂົ້າຢູ່ຄົນລະເບື້ອງ. ບັນດາກຸຕິຕ່າງໆ ສ້າງຂຶ້ນໃນສະຕະວັດທີ 19 ເປັນຕົວຢ່າງສະຖາປັດຕິຍະກຳທີ່ໜ້າສົນໃຈ ເນື່ອງຈາກມີລັກສະນະປະສົມປະສານກັນລະຫວ່າງໂຄງສ້າງເບື້ອງເທິງ ເຮັດດ້ວຍໄມ້ສ່ວນເບື້ອງລຸ່ມກໍ່ໂບກດ້ວຍດິນຈີ່ ແລະ ປະທາຍປູນ ນອກຈາກນີ້ແລ້ວ ວັດລ່ອງຄູນຍັງມີໜັງສືໃບລານ ທີ່ມີຄຸນຄ່າບັນຈຸໄວ້ໃນຕູ້ແກ້ວ 2 ຕູ້ ຖືກເກັບມ້ຽນໄວ້ໃນກຸຕິຫລັງທີ 4. ຍ້ອນຂາດການເບິ່ງແຍງ ກຸຕິດັ່ງກ່າວ ກໍ່ບໍ່ມີໃຜຢູ່ ຕູ້ກໍ່ເປ່ເພ ເຮັດໃຫ້ໜັງສືໃບລານ ຢູ່ໃນສະພາບຖືກປວດກັດ, ແຕກມັດ ແຕກຜູກຊະຊາຍ.

ໄປພ້ອມກັບການອະນຸລັກວັດລ່ອງຄູນ ຂອງກົມພິພິທະພັນ ແລະ ວັດຖຸບູຮານ ໜັງສືໃບລານ ກໍ່ໄດ້ຖືກອະນາໄມ, ເຊັດຖູ, ຈັດໝວດໝູ່ຂຶ້ນທະບຽນ ດ້ວຍການຮ່ວມມືຂອງນັກວິຊາການ ພະສົງ ແລະ ຊາວບ້ານ ໆຊຽງແມນ.

ໃນພິທີສະຫລຸບໄດ້ມີການເຂົ້າຮ່ວມເປັນສັກຂີພິຍານຈາກຫລາຍພາກສ່ວນ ເຊັ່ນ : ນາງ **ດາລາ ກັບລະຍາ** ຫົວໜ້າໂຄງການ **ສາທຸລຳຈັນ ວິຣະຈິດໂຕ** ປະທານ ພ.ສ.ລ. ແຂວງ ພ້ອມດ້ວຍພະສົງຈຳນວນໜຶ່ງ, ທ່ານ ບົວສີ ຮອງຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ **ທ່ານ ສຳລິດ ບົວສີສະຫວັດ** ທີ່ປຶກສາດ້ານວິຊາການຂອງໂຄງການ ນອກນັ້ນ ຍັງມີ **ເຈົ້າເມືອງ** ໆ ຈອມເພັດ ພ້ອມດ້ວຍອຳນາດການປົກຄອງ ແລະ ຊາວບ້ານຊຽງແມນເຂົ້າຮ່ວມຢ່າງຄຶກຄື້ນ ສະແດງໃຫ້ເຫັນວ່າ ທຸກພາກສ່ວນໄດ້ເຫັນຄວາມສຳຄັນຂອງວຽກງານ ການປົກປັກຮັກສາໜັງສືໃບລານຢ່າງແທ້ຈິງ.

ໃນໂອກາດນີ້ **ນາງ ດາລາ ກັບລະຍາ** ຫົວໜ້າໂຄງການ ປົກປັກຮັກສາໜັງສືໃບລານ ໄດ້ມອບເງິນອຸດໜູນ **2.128.000** ກີບ ເປັນງວດທີສອງ, ເພື່ອຊຸກຍູ້ການສຶກສາສົງຂອງແຂວງຫລວງພະບາງ ຫລັງຈາກທີ່ໄດ້ມອບໃນງວດທີໜຶ່ງ **2.128.000** ໃນກາງປີ 1994.

ເລີ່ມແຕ່ເດືອນມັງກອນ ໜ່ວຍສຳຫລວດສືບຕໍ່ການສຳຫລວດ ທີ່**ວັດໂຄມຂວາງ** ເຂດໂຄມຂວາງ ເມືອງຫລວງພະບາງ ນັກສຳຫລວດຂອງແຂວງພາກັນອຸ່ນໃຈຂຶ້ນທີ່ທ່ານອາຈານ **ສຳລິດ ບົວສີສະຫວັດ** ວິຊາການອາວຸໂສ ຜູ້ຊຳນານ ມານຳໜ້າພາທາງໃນການຈັດໝວດໝູ່. ບໍ່ສະເພາະແຕ່ໃນການສຳຫລວດເທົ່ານັ້ນ ທີ່ເພິ່ນມີຄວາມຊຳນານ, ວຽກງານການປຸກລະດົມອົບຮົມຊາວບ້ານ, ພະສົງ ໃຫ້ເຂົ້າມາຮ່ວມອະນາໄມ, ເຊັດຖູຊ່ວຍກັນ ເພິ່ນກໍ່ມີວິທີທີ່ເປັນເອກະລັກຂອງເພິ່ນ ນອກຈາກມາຊ່ວຍເລື່ອງການສຳຫລວດ

( ອ່ານຕໍ່ໜ້າ 4 )

# ນ້ຳໃຈ ຂອງສາທຸ ອ້ວນ

ລິດຈະນາໂດຍ : ***ມະຫາບຸນຍົກ ແສນສູນທອນ***

ຈາກ ໜັງສືໃບລານວັດໃໝ່ສຸວັນນະພູມມາຣາມ

( ເມືອງຫລວງພະບາງ )

## ຄຳເຫັນຂອງຜູ້ລິດຈະນາ

**ຂ້າພະເຈົ້າໄດ້ໄປຄົ້ນຄວ້າ ແລະ ສຳຫລວດໜັງສືໃບລານ ຢູ່ແຂວງຫລວງພະບາງ ຫລາຍໆວັດ ມີຈຳນວນເປັນໝື່ນໆຜູກ ສ່ວນຫລາຍແມ່ນເປັນໜັງສືບັນທຶກພະທຳຄຳສັ່ງສອນ ທາງພຸດທະ ສາສະໜາ ແລະ ຮີດຄອງປະເພນີຂອງຊາວຫລວງພະບາງ ແລະ ປະຊາຊົນລາວທົ່ວຊາດ. ການບັນທຶກໄວ້ນັ້ນ ບາງມັດເປັນພາສາປາລີລ້ວນ, ບາງມັດເປັນພາສາລາວບູຮານ, ບາງມັດເປັນພາສາ ປາລີແປລາວ, ບາງມັດກໍ່ມີລັກສະນະເປັນກອນຮ່າຍ ແຕ່ເປັນກາບກອນໂຄງນັ້ນ ບໍ່ສູ້ພົບເຫັນ ດັ່ງນັ້ນ ເມື່ອຂ້າພະເຈົ້າ ໄດ້ເຂົ້າໄປສຳຫລວດໜັງສືໃບລານຢູ່ວັດໃໝ່ ສຸວັນນະພູມາລາມ ຊຶ່ງເປັນວັດ ຂອງອະດີດ ສົມເດັດພະສັງຄະລາດ ຂ້າພະເຈົ້າຈຶ່ງໄດ້ພົບໜັງສືໃບລານຜູກໜຶ່ງ ໃສ່ຊື່ວ່າ " ນ້ຳໃຈ ຂອງ ສາທຸອ້ວນ " ເມື່ອອ່ານເບິ່ງ ເຫັນວ່າເປັນຄຳກອນແບບອັກສອນສັງວາດແດ່ ກາບແດ່ ໂຄງແດ່ປົນກັນ. ເນື້ອໃນຂອງຄຳກອນ ແມ່ນເວົ້າເຖິງປະຫວັດການສ້າງສົມວັດສົບບາກ ແຄມນ້ຳຄານ ແຕ່ເນື້ອໃນສະທ້ອນ ໃຫ້ເຫັນຮູບພາບທຳມະຊາດ, ສັງຄົມ ການພົວພັນລະຫວ່າງຄົນກັບວັດຖຸ ເປັນການພັນລະນາທີ່ມ່ວນ ອອນ ຊອນ ໃຊ້ສັບພາສາຈັບໃຈຜູ້ອ່ານ ແລະ ຍັງເປັນການແຊກທຳມະທາງພຸດທະສາສະໜາ ເຂົ້າໄປ ໄດ້ຢ່າງເໝາະສົມ ແລະ ກົມກືນ.**

**ຂ້າພະເຈົ້າເຫັນວ່າ ການລິດຈະນາ "ນ້ຳໃຈຂອງສາທຸອ້ວນ" ນີ້ ເປັນການເຜີຍແຜ່ສ່ວນໜຶ່ງ ຂອງມໍລະດົກທາງວັນນະຄະດີບູຮານ ທີ່ບັນພະບຸລຸດເຮົາໄດ້ປະດິດແຕ່ງໄວ້ໃນຄັ້ງອະດີດ ເໝາະສົມ ແກ່ການຖ່າຍທອດ ໃຫ້ແກ່ຮຸ່ນຄົນຕໍ່ໆໄປ...**

ຂໍ ຍົກເອົ້ອງຊຸລີນ້ອມ
ຖວາຍພຸດໂທ ທຳສົງ
ອວນນີ້ ນາມະກອນອ້ວນ
ເນົານອກກ້ຳ
ເຖົ້າແກ່ຊັ້ນ
ທັງສາວໃຂ
ປິດຕາໄທ້
ມາຕຸເລດໄທ້

ສະເນີພາກພຽງສຽນ ກ່ອນແລ້ວ
ທີ່ຢາແຢ່ງໄຫວ້
ຊາຕາບ້ານເກົ່າ
ຊຽງເງິນພຸ້ນພາກໄກ
ເຊື້ອຊີ່ແສນທິດຊົມ
ຝ່າຍນະຄອນກຸງກວ້າງ
ບົວສີຊັ້ນຊີ່
ຈັນທາແທ້ ຊີ່ເຕີມ

ປູ່ນັ້ນ ນາມຊື່ຊາງ
ຍ່ານັ້ນ ພົງພັນຫມາຍ
ອັນວ່າ ບົວສີຫ້າວ
ຫາກແມ່ນພໍ່ແມ່ໃຫ້
ອອນຈັກແຕ້ມແຕ່ງຂໍ້
ຄາວເມື່ອ ອອນເປັນສົມ
ບັດນີ້ ຈັກກ່າວເຖິງທົບທ້ອງ
ສືບຕໍ່ຫລາຍເຊັ່ນທ້າວ
ນັບແຕ່ຂຸນບູຣົມທ້າວ
ເຊັ່ງຊ່ວງນາມະກອນຊວາ
ອັນວ່າ ລາຊາເຈົ້າ
ຕໍ່ຈາກນັ້ນ
ທຸກຜູ້ພົບເມືອງລ້ອນ
ທຸກທີ່ທໍແມນມີ
ເຖິງເມື່ອອົງກະສັດໄທ້
ທັງພະໄຊຍະເຊດຖາທິຣາດທ້າວ
ຈຶ່ງໄດ້ມີຄົນເຂົ້າ
ແປງອາຣາມ
ປະຕິມາກອນຕັ້ງ
ທຸກຄ່ຳເຊົ້າ
ຈຶ່ງໄດ້ມີຊື່ຊັ້ນ
ປະຕິມາກອນຄຳ
ກະສັດຕາໄທ້
ຕຸ້ມໄພຟ້າ
ປ່າງເມື່ອຣາຊາເຈົ້າ
ຊົງພະນາມສີ
ພົບເມືອງລ້ອນ
ມີຫມູ່ໂສມບອດສ້າງ
ພໍເມື່ອ ສຸພະໂຍກຍ້າຍ
ສຸຣິໂຍເລີຍ
ເປັນເມື່ອຍາມຟົນເຂົ້າ
ສັພພະປີ ແມ່ນແມ້ງ
ແຕ່ນັ້ນ ອອນໄດ້ຈາກແຕ່ງທ້ອງ

ພົງເຜົ່ານະຄອນຫລວງ
ຊື່ເດີມສາວຫລ້າ
ຈັບທາທັງຄູ່
ອອນໄດ້ເກີດມາ ແທ້ແລ້ວ
ໄຂວາດກອນປະຈິດ ກ່ອນແລ້ວ
ຢູ່ຄອຍຄອງສ້າງ
ຫລວງພະບາງ ຄາວເກົ່າ
ກະສັດໄທ້ນັ່ງປອງ
ເປັນອາດຄອງເມືອງ
ຊື່ປະຖົມຕອງຕັ້ງ
ຈອມເມືອງຕຸ້ມໃພ່
ຫລາຍເຊື້ອສືບພະວົງ
ຊອບເຊື່ອທາງແຖນ
ຄູ່ພາຍພູມບ້ານ
ທຣົງເມືອງຟ້າງຸ່ມ
ເປັນເຈົ້ານັ່ງນະຄອນ
ຖືເຊື້ອພະໂຄດົມ
ບວດໂສມສົມສ້າງ
ຕາງອົງພຸທະຣູບ
ວອນໄຫວ້ ຍອດພະຄຸນ
ເມືອງໃຫມ່ຫລວງພະບາງ
ຊ່າລືທັງຄ້າຍ
ຫລາຍພະອົງສືບຕໍ່
ເມືອງບ້ານຢູ່ກະເສີມ
ທຣົງຣາດນະຄອນຂວາງ
ສວ່າງວົງກຽນກວ້າງ
ປະສົງຄຸນຄອງປະເສີດ
ອຸດົມດ້ວຍເຣື່ອງທານ
ສຶກຮ່ວມຮຽງເສົາ ພຸ້ນເຢີ
ລວງເມ ເມື່ອຫນ້າ
ຫາແຮມເດືອນແປດ
ພັນສາມຮ້ອຍເສດສາມ
ທ້ອງທ່າເມືອງຫລວງ

ໝາຍມຸ່ງເມືອຊຽງເງິນ
ໄດ້ພັກເຊົາດອນກວ້າງ
ພົບໝູ່ພົນພໍ່ຄ້າ
ຂອນຈຶ່ງໄດ້ທ່ຽວຢ້ຽມ
ພົບໝື່ນສຸພັນນາ
ສວັດສດີດ້ວຍ
ຖາມທີ່ປະໂຍດໄດ້
ເມື່ອນັ້ນ ໝື່ນສຸພັນໄດ້
ຂໍພະອິນດູຜາຍ
ຝູງໝູ່ ຊາວຈີນເບື້ອງ
ຍິນວ່າ ຈີນຊອບສ້າງ
ແຕ່ບໍ່ມີໃຜຜູ້
ເປັນແຕ່ວາຈາຖແລງ
ຄັນວ່າ ພະຫາກອິນດູໄດ້
ກໍຈັກເປັນທີ່ໄດ້
ຄ້ອມວ່າ ຈາກັນແລ້ວ
ສຸຣິໂຍລົງ
ອັນວ່າ ອາໂປເບື້ອງ
ເມກທ່ອນຮ້ອງ
ຈຶ່ງໄດ້ ນິດທະເນັ່ງເນື້ອ
ທັງໂສມສົງ
ມີໄດ້ມີລາງຮ້າຍ
ຈິດຫາກງາມແງ່ພ້ຽງ
ຜໍເມື່ອລາຕີຂ້ອນ
ອອນກໍສັນຍາໝາຍ
ຊົງຄິດຄອງຄຸນລ້ຳ
ສິ່ງໃດຣີ ຈຶ່ງຈັກວິເສດແທ້
ພິບິດຫລິງເຫັນເບື້ອງ
ອັນທີ່ເທຫານຂອງ
ນັບເນື່ອງເປັນແນວເນື້ອ
ທ່ອນຈັກປຸນປຽບໄດ້

ສົ່ງເຮືອທຽວໃຊ້
ສິບແສນບ້ານປ່ຽວ
ຂາຍຊື້ສິ່ງສະບຽງ
ຢາມໝູ່ຊາວເຮືອ
ກ່າວຖາມເຖິງຖ້ອຍ
ຈາກັນມ້າວມ່ອນ
ການດັ້ນດຸ່ງມາ ນັ້ນແລ້ວ
ຖແລງກ່າວກອນປະສົງ
ໂຜດເມືອຢາມຢ້ຽມ
ແຄມຄານສິບບາກທີ່ພຸ້ນ
ສະຖານລ້ຳພັດທະສີມ
ພ້ອມແຕ່ງເປັນຫລັງໄດ້ນາ
ເລົ່າລົມດາຍລ້າ
ເດີນເມືອເວົ້າວ່າ ດັ່ງນັ້ນ
ໂດຍດ້ານດັ່ງປະສົງ ແທ້ແລ້ວ
ເລີຍລາກລາໜີ
ລັບພູພັນຊັ້ນ
ເປັນຝົນຮຳທົ່ວ
ລົມຕ້ອງກິ່ງໄພ
ຫລັບແຈບຈົ່ມຕາ
ຄູ່ຕົນພຽງພ້ອມ
ປະການໃດ ດົນຜ່າ ແທ້ແລ້ວ
ພຽງເນື້ອໜ່ວຍມະນີ
ເຊົ້າສວ່າງບົວລະພາ
ຕື່ນມາມີຊ້າ
ໂກສົນສິ່ງປະເສີດ
ທັງລ້າຍທ່ອນທຽມ ໄດ້ນັ້ນ
ການແຕ່ງໂກສົນ
ທອດຖວາຍສົມເຈົ້າ
ປັດໄຈທານທັງສີ່ ເຫລົ່ານີ້
ທານສ້າງພັດທະສີມ

*(ອ່ານຕໍ່ສະບັບໜ້າ)*

# ຄວາມຊົງຈຳຈາກອະດີດ

**ການບັນທຶກຜູ້ປົກຄອງ ຂອງຄົນບູຮານ ມີ :**

* ພໍ່ແມ່ຍ່ອມເປັນໃຫຍ່ ແກ່ລູກ
ລູກຍ່ອມເປັນນ້ອຍແກ່ພໍ່ແມ່

* ຖ້າບໍ່ມີພໍ່ແມ່ ຍ່ອມເປັນນ້ອຍ ແກ່ຜູ້ ເປັນພີ່

* ຖ້າບໍ່ມີພີ່ຍິງ-ຊາຍ ຍ່ອມເປັນນ້ອຍ ແກ່ເຜົ່າພົງວົງສາ

* ຖ້າບໍ່ມີເຜົ່າພົງວົງສາ ທີ່ຕິດຕໍ່ກັບ ຍ່ອມເປັນນ້ອຍ
ແກ່ຜູ້ອັນຢູ່ກັບ ( ຄືອາໄສ ຢູ່ກັບຜູ້ໃດ ເປັນນ້ອຍແກ່ຜູ້ນັ້ນ )

* ຖ້າບໍ່ອາໄສຢູ່ກັບຜູ້ໃດ ກໍ່ໃຫ້ເປັນ ນ້ອຍແກ່ນາຍບ້ານ

* ຖ້າບໍ່ມີນາຍບ້ານ ກໍ່ໃຫ້ເປັນນ້ອຍ ແກ່ທ້າວພະຍາ ມະຫາກະສັດ
ຕາມລຳດັບ ຂັ້ນແຫ້ດາຍ.

*ເກັບກຳໂດຍ :* ***ບຸນເສີດ ຕຳມະຈັກ***


ຄະນະຈັດທຳ

ຫົວໜ້າ ບັນນາທິການ : ດາຣາ ກັລຍາ
ຜູ້ຊ່ວຍ ບັນນາທິການ : ຈັນສະໝຸດ ທິລະກຸນ
ຈັດໜ້າ-ຄອມພິວເຕີ : ບຽງຄຳ ບັນທະວົງດວງສີ
ມາລີ ທອງທຸມມາ

ເຈົ້າຂອງ

ໂຄງການປົກປັກຮັກສາພັງສືໃບລານລາວ

ສຳນັກງານ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຕູ້ ປ.ນ 6244 ໂທລະສັບ 213029

ຖ່າຍພາບ

- ຈະເລີນໄຊ ພົມມະວົງສາ
- ດາລາວັນ ລາດຊະວົງ
- ສຸພາພອນ ລັດຕະນະລາສີ
- ສຸນັນທາ ກັລຍາ